ກະຊວງອຸດສາຫະກຳ ແລະ ການຄ້າ

ສະຖາບັນຄົ້ນຄວ້າເສດຖະກິດການຄ້າ

# ການສຶກສາຄວາມສາມາດໃນການສ້າງຄັງແຮເຂົ້າ ແລະ ຂາຍເຂົ້າ ເປັນສິນຄ້າຂອງ ສປປ ລາວ

(2013-2014)

*ພະແນກຄົ້ນຄວ້ານະໂຍບາຍການຄ້າ*

*ຄະນະຄົ້ນຄວ້າ: ວຽງສະຫວ່າງ ທິບພະວົງ, ພອນແກ້ວ ມິດດາວົງ, ພູຄຳ ວົງພັນທອງ, ຈັນທະພອນ ສີລີປັນໂຍ, ທະນົງອາດ ບຸນນະພົນ, ສົງໄຊທິບ ບາວີຄຳ.*

**ພາກສະຫຼຸບຫຍໍ້.**

ຜ່ານການສຶກສາ ຄວາມອາດສາມາດໃນການສ້າງຄັງແຮເຂົ້າ ແລະ ຂາຍເຂົ້າເປັນສິນຄ້າຂອງ ສປປ ລາວ ພົບວ່າ ຫຼາຍແຂວງຂອງ ສປປ ລາວ ມີຄວາມອາດສາມາດສູງໃນການສະສົມເຂົ້າເພື່ອເປັນຄັງແຮຂອງປະເທດ ເຊັ່ນ: ແຂວງສະ ຫວັນນະເຂດ, ຈຳປາສັກ, ສາລະວັນ, ວຽງຈັນ, ນະຄອນຫຼວງວຽງຈັນ, ຄຳມ່ວນ, ບໍລິຄຳໄຊ, ບໍ່ແກ້ວ, ອັດຕະປື ແລະ ໄຊຍະບູລີ. ແຕ່ເຖິງຢ່າງໃດກໍ່ດີ ຍັງມີແຂວງທີ່ມັກຂາດແຄນເຂົ້າໃນແຕ່ລະປີ ຄື: ແຂວງຫຼວງພະບາງ, ອຸດົມໄຊ, ຫົວພັນ, ຜົ້ງສາລີ, ຊຽງຂວາງ ແລະ ຫຼວງນ້ຳທາ. ສຳການສົ່ງເຂົ້າອອກເປັນເປັນສິນຄ້າໃນໄລຍະຜ່ານມາ ແມ່ນເຫັນວ່າ ປະຈຸບັນຢູ່ ສປປ ລາວ ມີ 32 ບໍລິສັດທີ່ສົ່ງເຂົ້າອອກ ເປັນທາງການໄປຍັງ 19 ປະເທດ ໃນສອງ ທະວີບ ຄື: ຢູໂຣບ ແລະ ອາຊີ. ແຕ່ປະລິມານເຂົ້າທີ່ສົ່ງ ອອກໄປປະເທດຄູ່ຄ້າເຫຼົ່ານັ້ນຍັງຖືວ່າໜ້ອຍຫຼາຍ ຖ້າເບິ່ງໃນ ອັດຕາສ່ວນແບ່ງຂອງຕະ ຫຼາດທີ່ ສປປ ລາວ ມີໃນປະຈຸບັນ. ອຸປະສັກທີ່ສຳຄັນ ຕໍ່ທຸລະກິດສົ່ງເຂົ້າອອກຂອງ ປະເທດ ແມ່ນ ຄ່າຂົນສົ່ງສິນຄ້າ ແລະ ຂັ້ນຂອດການຂໍອະນຸຍາດສົ່ງອອກທີ່ຍັງບໍ່ທັນສົ່ງເສີມ ແລະ ເອື້ອອຳນວຍໃຫ້ ທຸລະກິດສົ່ງເຂົ້າອອກຂອງປະ ເທດ ເທົ່າທີ່ຄວນ. ດັ່ງນັ້ນ ການຫາວິທີການຫຼຸດຜ່ອນຄ່າຂົນສົ່ງ ແລະ ປັບປຸງຂັ້ນຂອດ ການປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງໃຫ້ມີຄວາມສະດວກ ແລະ ວ່ອງໄວຕໍ່ທຸລະກິດສົ່ງເຂົ້າອອກນັ້ນ ແມ່ນຈຳເປັນ ແລະ ສຳຄັນ ເພື່ອພັດທະນາ ແລະ ສົ່ງເສີມການສົ່ງເຂົ້າອອກຂອງປະເທດໃນອານາຄົດ.

# ການສຶກສາຄວາມສາມາດໃນການສ້າງຄັງແຮເຂົ້າ ແລະ ຂາຍເຂົ້າເປັນສິນຄ້າຂອງ ສປປ ລາວ

## I. ພາກສະເໜີ.

ການສ້າງຄວາມເຂັ້ມແຂງທາງດ້ານສະບຽງອາຫານຖືວ່າເປັນວຽກບູລິມະສິດຂອງລັດຖະບານຫຼາຍປະເທດ ເພື່ອເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ການເມືອງມີຄວາມໝັ້ນຄົງ. ພືດສະບຽງອາຫານມັກຈະມີລາຄາປ່ຽນແປງຕາມລະດູການຜະລິດ/ປູກ ໂດຍທົ່ວໄປແລ້ວປັດໃຈທີ່ມັກກະທົບຕໍ່ລາຄາສະບຽງອາຫານພາຍໃນປະເທດແມ່ນຂຶ້ນກັບປະລິມານການສະໜອງໃນແຕ່ລະໄລຍະ ແຕ່ເຖິງຢ່າງໃດກໍ່ດີໄພທຳມະຊາດ, ອັດຕາເງິນເຟີ້ ແລະ ວິກິດການເສດຖະກິດຈາກພາຍນອກຫຼາຍຄັ້ງກໍ່ສົ່ງຜົນກະທົບຕໍ່ລາຄາສະບຽງອາຫານພາຍໃນປະເທດເຊັ່ນກັນ ໂດຍສະເພາະຕໍ່ກັບປະເທດທີ່ສ່ວນໃຫຍ່ຕ້ອງເພິ່ງພາການນຳເຂົ້າສະບຽງອາຫານຈາກຕ່າງປະເທດ. ສປປ ລາວ ໃນໄລຍະຜ່ານມາຖືວ່າຍັງສາມາດສະໜອງສະບຽງອາຫານໂດຍສະເພາະເຂົ້າໃຫ້ແກ່ຕະຫຼາດພາຍໃນປະເທດໄດ້ຢ່າງພຽງພໍ ແຕ່ກໍ່ຍົກເວັ້ນບາງປີທີ່ຕ້ອງອາໃສການຊ່ວຍເຫຼືອເຂົ້າຈຳນວນໃດໜຶ່ງຈາກອົງການຈັດ ຕັ້ງສາກົນ ແລະ ລັດຖະບານປະເທດເພື່ອນມິດໃນເວລາທີ່ຜົນຜະລິດເຂົ້າຂອງປະເທດຕົກຕໍ່າຍ້ອນຖືກກະທົບຈາກໄພທຳມະຊາດ ຕົວຢ່າງ: ໃນປີ 2005 ອົງການອາຫານໂລກໄດ້ຊ່ວຍເຫຼືອເຂົ້າຈຳນວນ 6.872 ໂຕນໃຫ້ປະຊາຊົນທີ່ຂາດແຄນໃນ 40 ເມືອງຢູ່ 10 ແຂວງທົ່ວປະເທດ[1ກ]. ເຂົ້າຍັງຖືວ່າເປັນພືດທັນຍາຫານທີ່ປະຊາຊົນລາວປູກຫຼາຍທີ່ ສຸດ ໃນສົກປີ 2010/2011 ມີເນື້ອທີ່ປູກເຂົ້າທົ່ວປະເທດກວມ 61% ຂອງເນື້ອທີ່ກະສິກຳທັງໝົດ ແລະຊະນິດເຂົ້າທີ່ມັກປູກຫຼາຍທີ່ສຸດແມ່ນເຂົ້າໜຽວ ເຊິ່ງກວມ 93% ຂອງຈຳນວນເນື້ອທີ່ປູກເຂົ້າທົ່ວປະເທດ[1ຂ]. ນອກຈາກນັ້ນ ຈາກການຄິດໄລ່ປະລິມານເຂົ້າເຫຼືອກິນຂອງປະເທດໃນປີ 2012 ທີ່ໄດ້ສະແດງໃນພາກທີສອງຂອງບົດສຶກສານີ້ ເຫັນວ່າ ສປປ ລາວ ມີເຂົ້າເຫຼືອກິນລວມປະມານ 2.083.331 ໂຕນ ເຊິ່ງຈຳນວນເຂົ້ານີ້ສາມາດກາຍເປັນຄັງແຮເຂົ້າ ຂອງປະເທດ ແລະ ເປັນສິນຄ້າສົ່ງອອກ ຖ້າຫາກໄດ້ຮັບການສົ່ງເສີມທີ່ເໝາະສົມຈາກຂະແໜງການທີ່ກ່ຽວຂ້ອງ.

ເພື່ອເຮັດໃຫ້ ສປປ ລາວ ກາຍເປັນປະເທດທີ່ມີຄວາມໝັ້ນຄົງທາງດ້ານສະບຽງອາຫານຢ່າງແທ້ຈິງນັ້ນ ພັກ ແລະ ລັດຖະບານໃນໄລຍະຜ່ານມາໄດ້ປ່ອຍເງິນກູ້ດອກເບ້ຍຕໍ່າໃຫ້ກັບເຈົ້າຂອງໂຮງສີເຂົ້າ ຫຼື ບໍລິສັດສະບຽງອາຫານຢູ່ບາງແຂວງເປົ້າໝາຍ ຄື: ແຂວງຫຼວງພະບາງ, ອຸດົມໄຊ, ຊຽງຂວາງ, ນະຄອນຫຼວງວຽງຈັນ, ຄຳມ່ວນ, ສາລະວັນ ແລະ ເຊກອງ ໃຫ້ເກັບຊື້ເຂົ້າກັບປະຊາຊົນ ແລ້ວເກັບຮັກສາໄວ້ແທນລັດຖະບານໃນສາງເຂົ້າຂອງຕົນ ໂດຍລັດຖະບານຈະນຳໃຊ້ເຂົ້າແຮນີ້ຊ່ວຍເຫຼືອເຂດທີ່ຂາດແຄນ ແລະ ດັດສົມຕະຫຼາດຖ້າຫາກລາຄາເຂົ້າຫາກມີການເໜັງຕີງແຮງ. ນອກຈາກນັ້ນໃນໄລຍະຜ່ານມາກໍ່ຍັງມີການສຶກສາກ່ຽວກັບໂຄງການຜະລິດເຂົ້າເປັນສິນຄ້າຢູ່ເຂດທີ່ມີເງື່ອນໄຂທາງດ້ານການປູກເຂົ້າ ແລະ ມີປະລິມານຜົນເກັບກ່ຽວເຂົ້າຫຼາຍໃນແຕ່ລະປີ ເຊັ່ນ: ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ ອີກດ້ວຍ. ດັ່ງນັ້ນເພື່ອເປັນການປະກອບສ່ວນທາງດ້ານວິຊາການຕໍ່ແຜນການສ້າງຄັງແຮເຂົ້າຂອງລັດຖະບານ ແລະ ການຂາຍເຂົ້າເປັນສິນຄ້າ ບົດສຶກສານີ້ຈະໄດ້ລົງເລິກຄົ້ນຄວ້າໃນສອງບັນຫາໃຫຍ່ ຄື: (1) ສະພາບການຜະລິດເຂົ້າ ແລະ ການສ້າງຄັງແຮເຂົ້າ, ແລະ (2) ຕະຫຼາດສົ່ງອອກ ແລະ ຄວາມສາມາດໃນການແຂ່ງຂັນຂອງເຂົ້າລາວ.

[1ກ] ຂໍ້ມູນຈາກບົດລາຍງານປະຈຳປີ 2005 ຂອງອົງການອາຫານໂລກປະຈຳ ສປປ ລາວ, ແຫ່ງຂໍ້ມູນ: <www.fsd.ch/docs/Annual%20report%20WFP%20Laos.pdf>

[1ຂ] ຂໍ້ມູນໄດ້ຈາກການສຳຫຼວດສະຖິຕິກະສິກຳສົກປີ 2005 - 2012, ກະຊວງກະສິກຳ ແລະ ປ່າໄມ້.

## II. ຂອບເຂດການສຶກສາ ແລະ ວິທີວິທະຍາໃນການຄົ້ນຄວ້າ.

### 2.1 ຂອບເຂດການສຶກສາ.

ການວິເຄາະ ແລະ ນຳໃຊ້ຂໍ້ມູນແມ່ນກວມເອົາທຸກແຂວງໃນທົ່ວປະເທດ ເພື່ອສຶກສາເຖິງຄວາມອາດສາມາດລວມ ຂອງ 17 ແຂວງໃນການສ້າງຄັງແຮເຂົ້າ ແລະ ຂາຍເຂົ້າເປັນສິນຄ້າຂອງ ສປປ ລາວ. ການສຶກສາບໍ່ໄດ້ຈຳແນກປະເພດເຂົ້າ (ໜຽວ ຫຼື ຈ້າວ) ແລະ ເຂົ້ານາປີ, ນາແຊງ ຫຼື ເຂົ້າໄຮ່ ເພາະການຄົ້ນຄວ້າຄັ້ງນີ້ແມ່ນເຮັດໃນໄລຍະສັ້ນ, ມີຄວາມຈຳກັດທາງດ້ານງົບປະມານໃຊ້ໃນການເກັບກຳຂໍ້ມູນ ແລະ ບວກກັບຂໍ້ມູນເຫຼົ່ານີ້ຍັງບໍ່ທັນໄດ້ມີການເກັບກຳຢ່າງລະອຽດຈາກພາກ ສ່ວນທີ່ກ່ຽວຂ້ອງໃນເວລາທີ່ທີມຄົ້ນຄວ້າໄດ້ລົງເກັບກຳຂໍ້ມູນ. ແຕ່ເຖິງຢ່າງໃດກໍ່ດີ ຜົນການສຶກສາແມ່ນໄດ້ອະທິບາຍໃຫ້ເຫັນເຖິງຄວາມອາດສາມາດໃນການປູກເຂົ້າ ແລະ ການຂາຍເຂົ້າເປັນສິນຄ້າຂອງ ສປປ ລາວ ໃນປະຈຸບັນ.

### 2.2 ວິທີວິທະຍາໃນການຄົ້ນຄວ້າ.

ບົດຄົ້ນຄວ້ານີ້ໄດ້ນຳໃຊ້ການວິເຄາະແບບພັນລະນາດ້ວຍຕາຕະລາງສະຖິຕິພື້ນຖານມາອະທິບາຍກ່ຽວກັບເນື້ອທີ່ການຜະລິດ, ປະລິມານ ແລະ ຜະລິດຕະພາບການປູກເຂົ້າ ແຕ່ປີ 2005 - 2012. ການສຶກສາໄດ້ລົງເລິກຄົ້ນຄວ້າຄວາມອາດສາມາດໃນການສ້າງຄັງແຮເຂົ້າ ແລະ ການຂາຍເຂົ້າເປັນສິນຄ້າຂອງປະເທດ. ດັ່ງນັ້ນ ການວິເຄາະປະລິມານເຂົ້າເຫຼືອກິນຂອງແຕ່ລະແຂວງໂດຍໃຊ້ຕາຕະລາງຄິດໄລ່ທາງດ້ານສະຖິຕິແມ່ນໄດ້ຖືກນຳໃຊ້ ແລະນອກຈາກນັ້ນ ວິທີວິເຄາະຄວາມສາມາດໃນການແຂ່ງຂັນຂອງ ສປປ ລາວ (RCA) ບວກກັບຂໍ້ມູນການຄ້າເຂົ້າຂອງສາກົນ ເພື່ອອະທິບາຍເຖິງຄວາມອາດສາມາດໃນການຄ້າເຂົ້າຂອງປະເທດແມ່ນສອງວິທີການທີ່ຖືກໃຊ້ໃນພາກການວິເຄາະຂອງບົດສຶກສາ.

## III. ສະພາບການປູກເຂົ້າ ແລະ ຄວາມສາມາດໃນການສ້າງຄັງແຮເຂົ້າຂອງບັນດາແຂວງ.

3.1 ສະພາບການປູກເຂົ້າລວມ.

### ກ. ເນື້ອທີ່ປູກເຂົ້າຂອງປະເທດ.

ເນື້ອທີ່ກະສິກຳສ່ວນໃຫຍ່ຂອງ ສປປ ລາວ ແມ່ນຖືກໃຊ້ໃນການປູກເຂົ້າ; ເຂົ້າເປັນພືດກະສິກຳທີ່ປະ ຊາຊົນປູກຫຼາຍທີ່ສຸດຖ້າທຽບກັບພືດຊະນິດອື່ນ ຈາກຂໍ້ມູນການສຳຫຼວດກະສິກຳທົ່ວປະເທດແຕ່ປີ 2005 ຫາ ປີ 2012 ເຫັນວ່າເນື້ອທີ່ປູກເຂົ້າຂອງປະເທດສະເລ່ຍເພີ່ມຂຶ້ນ 2% ຕໍ່ປີ ຈາກ 793.980 ເຮັກຕາ ໃນປີ 2005 ມາເປັນ 939.011 ເຮັກຕາໃນປີ 2012[2] (ເບິ່ງເອກະສານຊ້ອຍທ້າຍ 1). ເນື້ອທີ່ປູກເຂົ້າຂອງປະເທດໂດຍລວມເຫັນວ່າມີຈຳນວນເພີ່ມຂຶ້ນເກືອບທຸກປີ ນັບແຕ່ປີ 2005 ຫາ 2012 ແຕ່ເຖິງຢ່າງໃດກໍ່ດີ ຖ້າແຍກການວິເຄາະອອກເປັນແຕ່ລະພາກຈະເຫັນວ່າ ພາກກາງຍັງຄອງອັນດັບໜຶ່ງທາງດ້ານເນື້ອທີ່ນາຖ້າທຽບກັບສອງພາກຍັງເຫຼືອດັ່ງຮູບສະແດງ 1 ແລະ 2 ລຸ່ມນີ້.

ນອກຈາກນັ້ນຂໍ້ມູນໃນເອກະສານຊ້ອນທ້າຍ 1 ເຮົາສາມາດສ້າງຮູບສະແດງ 3 ລຸ່ມນີ້ເພື່ອສັງເກດເບິ່ງຈຳນວນເນື້ອທີ່ນາຂອງແຕ່ລະແຂວງ ແລະສາມາດສະຫຼຸບໄດ້ວ່າ 5 ແຂວງທີ່ມີເນື້ອທີ່ນາຫຼາຍກວ່າໝູ່ແມ່ນ ແຂວງສະຫວັນນະເຂດ, ຈຳປາ ສັກ, ສາລະວັນ, ນະຄອນຫຼວງວຽງຈັນ ແລະ ວຽງຈັນ ຮອງລົງມາອີກ 5 ແຂວງແມ່ນແຂວງຄຳມ່ວນ, ໄຊຍະບູລີ, ບໍລິຄຳໄຊ, ຫຼວງພະບາງ ແລະ ຊຽງຂວາງ.

ຮູບສະແດງ 1.




ຮູບສະແດງ 2.




ແຫຼ່ງຂໍ້ມູນ: ຈາກສະຖິຕິກະສິກຳ, ກະຊວງກະສິກຳ ແລະ ປ່າໄມ້ (2005-2012).

ຮູບສະແດງ 3.




ແຫຼ່ງຂໍ້ມູນ: ຈາກສະຖິຕິກະສິກຳ, ກະຊວງກະສິກຳ ແລະ ປ່າໄມ້ (2005-2012).

ເພື່ອເຫັນໄດ້ການຂະຫຍາຍຕົວຂອງຈຳນວນເນື້ອທີ່ນາຢູ່ແຕ່ລະພາກຕໍ່ປີ ຕາຕະລາງ 1 ລຸ່ມນີ້ໄດ້ສະແດງໃຫ້ເຫັນ ຈຳນວນການປ່ຽນແປງຕໍ່ປີຂອງເນື້ອທີ່ນາຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ຂອງລາວ ໂດຍການວັດແທກເປີເຊັນການ ປ່ຽນແປງແຕ່ປີ 2006 ຫາ 2012 ແລະ ພົບວ່າທຸກພາກມີຄ່າສະເລ່ຍເປັນບວກເຊິ່ງໝາຍຄວາມວ່າການປ່ຽນແປງຈຳນວນເນື້ອທີ່ນາແມ່ນເພີ່ມຂຶ້ນ. ພາກໃຕ້ມີຄ່າສະເລ່ຍການປ່ຽນແປງເນື້ອທີ່ນາຕໍ່ປີສູງກວ່າທຸກພາກ ຄື 3.10% ຕໍ່ປີ, ຮອງລົງມາ ແມ່ນພາກກາງ 2.63%ຕໍ່ປີ ແລະ ສຸດທ້າຍແມ່ນພາກເໜືອ 1.46%ຕໍ່ປີ.

ຕາຕະລາງ 1: ເປີເຊັນການປ່ຽນແປງເນື້ອທີ່ນາຕໍ່ປີ.

| ລ/ດ | 2006 | 2007 | 2008 | 2009 | 2010 | 2011 | 2012 | ສະເລ່ຍ |
|---|---|---|---|---|---|---|---|---|
| **ພາກເໜືອ (%)** | -0.16 | -3 | 4 | 7 | 3 | -7 | 7 | 1.46 |
| **ພາກກາງ (%)** | 4 | 1 | 9 | 3 | -1 | 2 | 1 | 2.63 |
| **ພາກໃຕ້ (%)** | 0.15 | 2 | 7 | 3 | -1 | 8 | 2 | 3.10 |

ແຫຼ່ງຂໍ້ມູນ: ຜູ້ຄົ້ນຄວ້າຄິດໄລ່ຈາກສະຖິຕິກະສິກຳ, ກະຊວງກະສິກຳ ແລະ ປ່າໄມ້ (2005-2012)

**ຂ. ຜົນຜະລິດເຂົ້າທົ່ວປະເທດ.**

ຈາກຂໍ້ມູນຂອງເນື້ອທີ່ປູກເຂົ້າທົ່ວປະເທດທີ່ສະແດງໃນຂໍ້ 1.1 ຂ້າງເທິງ ທີ່ເຫັນວ່າພາກກາງແມ່ນເຂດທີ່ມີເນື້ອທີ່ປູກເຂົ້າຫຼາຍກ່ວາໝູ່ຂອງປະເທດຖ້າທຽບກັບພາກໃຕ້ ແລະ ພາກເໜືອ. ອີງໃສ່ເງື່ອນໄຂ ແລະ ສະພາບຂອງການປູກເຂົ້າຢູ່ ສປປ ລາວ ທີ່ຍັງມີເຕັກນິກການຜະລິດຕໍ່າ ໂດຍຕາມການລາຍງານຂອງສະຖິຕິກະສິກຳປີ 2012 ເຂົ້ານາປີ, ນາແຊງ ແລະ ເຂົ້າໄຮ່ມີຜະລິດຕະພາບສະເລ່ຍແມ່ນ 3.91 ໂຕນ/ເຮັກຕາ, 4.72 ໂຕນ/ເຮັກຕາ ແລະ 1.80 ໂຕນ/ເຮັກຕາ ຕາມລຳ ດັບ. ດັ່ງນັ້ນການທີ່ມີເນື້ອທີ່ປູກເຂົ້າຫຼາຍຂອງພາກ ຫຼື ແຂວງໃດໜຶ່ງແມ່ນຕົວຊີ້ວັດທີ່ສຳຄັນຕໍ່ປະລິມານຜົນຜະລິດເຂົ້າໃນຂົງເຂດ ຫຼື ແຂວງນັ້ນ. ໃນຮູບສະແດງທີ່ 4 ລຸ່ມນີ້ໄດ້ຊີ້ໃຫ້ເຫັນວ່າແຂວງທີ່ມີເນື້ອທີ່ປູກເຂົ້າຫຼາຍ (ເບິ່ງຮູບ 3) ແມ່ນ ແຂວງທີ່ມີປະລິມານຜົນເກັບກ່ຽວເຂົ້າຫຼາຍຂອງປະເທດ ເຊັ່ນ: ແຂວງສະຫວັນນະເຂດ, ຈຳປາສັກ, ນະຄອນຫຼວງວຽງຈັນ, ສາລະວັນ ແລະ ວຽງຈັນ. ຖ້າເບິ່ງຄວາມສຳພັນຂອງເນື້ອທີ່ປູກເຂົ້າກັບປະລິມານຜົນເກັບກ່ຽວຢູ່ຮູບສະແດງທີ 5 ກໍ່ເຫັນວ່າແຂວງໃດທີ່ມີເນື້ອທີ່ຫຼາຍຈະໃຫ້ຜົນຜະລິດເຂົ້າຫຼາຍກວ່າແຂວງທີ່ມີເນື້ອທີ່ປູກເຂົ້າໜ້ອຍ.

ຮູບສະແດງ 4.




ຮູບສະແດງ 5.



### 3.2 ການວິເຄາະປະລິມານເຂົ້າເຫຼືອກິນ ແລະ ຂາດກິນ.

ການຄິດໄລ່ປະລິມານເຂົ້າເຫຼືອ/ຂາດກິນຂອງ 17 ແຂວງທົ່ວປະເທດ ແມ່ນອີງໃສ່ຂໍ້ມູນການບໍລິໂພກເຂົ້າໃນໜຶ່ງມື້ຕໍ່ຄົນໃນແຕ່ລະແຂວງ ຈາກສະຖິຕິການສຳຫຼວດການຄ່າໃຊ້ຈ່າຍ ແລະ ການຊົມໃຊ້ໃນຄົວເຮືອນ (LECS4) 2007/2008 ເປັນຕົວຕັ້ງໃນການຄິດໄລ່ປະລິມານຄວາມຕ້ອງການເຂົ້າບໍລິໂພກທັງໝົດຂອງແຂວງ (ຈຳນວນປະຊາກອນໃນປີຄູນຈຳນວນຄວາມຕ້ອງການບໍລິໂພກເຂົ້າໃນປີ) ແລ້ວສົມທຽບກັບຈຳນວນເຂົ້າທີ່ຜະລິດໄດ້ໃນປີ (ເບິ່ງເອກະສານຊ້ອນທ້າຍ 3) ເພື່ອຊອກຫາປະລິມານເຂົ້າເຫຼືອກິນ ຫຼື ບໍ່ພໍກິນຂອງແຕ່ລະແຂວງໃນປີການຄິດໄລ່. ເຖິງຢ່າງໃດກໍ່ດີ ຂໍ້ມູນກ່ຽວກັບເຂົ້າເຫຼືອກິນ ຫຼື ບໍພໍກິນແຕ່ປີ 2009 ຂຶ້ນມາແມ່ນອາດບໍ່ສາມາດສ່ອງແສງໄດ້ສະພາບປະລິມານເຂົ້າເຫຼືອ/ຂາດກິນຂອງແຂວງຕົວຢ່າງໄດ້ຢ່າງຈະແຈ້ງ ເພາະຂໍ້ມູນ LECS4 ແມ່ນຂໍ້ມູນທີ່ເກັບກຳໃນຊ່ວງປີ 2007-2008 ດັ່ງນັ້ນປະລິມານບໍລິໂພກເຂົ້າໃນປີ 2009 ຫາ 2012 ອາດມີການປ່ຽນແປງຈາກປີ 2007/2008. ຕົວເລກຈຳນວນເຂົ້າເຫຼືອ/ຂາດກິນຂ້າງເທິງແມ່ນໝາຍເຖິງປະລິມານບໍລິໂພກເຂົ້າຂອງຄົນໃນແຂວງພຽງຢ່າງດຽວ ໂດຍບໍ່ໄດ້ບອກປະລິມານການນຳໃຊ້ເຂົ້າກິນໃນຈຸດປະສົງອື່ນ.

ຜົນການຄິດໄລ່ຄາດຄະເນປະລິມານເຂົ້າເຫຼືອກິນ ຫຼື ຂາດກິນຢູ່ແຕ່ລະແຂວງທົ່ວປະເທດໄດ້ຖືກສັງລວມໃນຕາຕະລາງ 2 ລຸ່ມນີ້. ອີງໃສ່ຂໍ້ມູນຢູ່ຕາຕະລາງ 2 ຍັງຊີ້ໃຫ້ເຫັນວ່າ 10 ອັນດັບແຂວງທີ່ມີປະລິມານເຂົ້າເຫຼືອກິນສະເລັ່ຍແຕ່ປີ 2008-2012 ແມ່ນແຂວງສະຫວັນນະເຂດ, ຈຳປາສັກ, ສາລະວັນ, ວຽງຈັນ, ນະຄອນຫຼວງວຽງຈັນ, ຄຳມ່ວນ, ບໍລິຄຳໄຊ, ບໍ່ແກ້ວ, ອັດຕະປື ແລະ ໄຊຍະບູລີ ຕາມລຳດັບ.

ຕາຕະລາງ 2: ຄາດຄະເນປະລິມານເຂົ້າເຫຼືອກິນ ຫຼື ຂາດກິນຂອງ 17 ແຂວງ (ຫົວໜ່ວຍ: ໂຕນ).

| ລ/ດ | ເຂົ້າເຫຼືອ/ ຂາດກິນ 2008 | ເຂົ້າເຫຼືອ/ ຂາດກິນ 2009 | ເຂົ້າເຫຼືອ/ ຂາດກິນ 2010 | ເຂົ້າເຫຼືອ/ ຂາດກິນ 2011 | ເຂົ້າເຫຼືອ/ຂາດ ກິນ 2012 | **ສະເລັ່ຍລວມ** |
|---|---|---|---|---|---|---|
| ຜົ້ງສາລີ | - 21 755 | - 22 632 | - 26 588 | - 30 772 | - 25 264 | **- 25 402** |
| ຫຼວງນ້ຳທາ | - 10 963 | - 10 747 | - 6 327 | - 6 503 | - 10 123 | **- 8 932** |
| ອຸດົມໄຊ | - 56 378 | - 32 469 | - 48 747 | - 36 361 | - 46 537 | **- 44 098** |
| ບໍ່ແກ້ວ | 14 376 | 18 568 | 23 485 | 18 905 | 16 004 | **18 267** |
| ຫຼວງພະບາງ | - 93 606 | - 70 115 | - 61 443 | - 73 714 | - 81 076 | **- 75 990** |
| ຫົວພັນ | - 56 937 | - 31 819 | - 38 969 | - 39 643 | - 38 232 | **- 41 120** |
| ໄຊຍະບູລີ | - 7 252 | 3 475 | 24 740 | 17 872 | 25 047 | **12 777** |
| ນະຄອນຫຼວງວຽງ | 82 856 | 158 661 | 148 225 | 127 646 | 148 234 | **133 124** |
| ຊຽງຂວາງ | - 7 714 | - 6 177 | - 13 541 | - 10 341 | - 7 941 | **- 9 143** |
| ວຽງຈັນ | 138 699 | 153 193 | 147 061 | 136 129 | 135 521 | **142 121** |
| ບໍລິຄຳໄຊ | 41 056 | 96 700 | 92 871 | 51 115 | 87 614 | **73 871** |
| ຄຳມ່ວນ | 73 048 | 91 266 | 107 959 | 21 774 | 119 981 | **82 806** |
| ສະຫວັນນະເຂດ | 375 454 | 390 519 | 380 151 | 290 508 | 426 926 | **372 712** |
| ສາລະວັນ | 153 907 | 133 028 | 134 535 | 177 844 | 161 943 | **152 251** |
| ເຊກອງ | 5 392 | - 5 | - 2 120 | - 3 346 | 5 910 | **1 166** |
| ຈຳປາສັກ | 139 388 | 169 767 | 34 314 | 191 316 | 294 883 | **165 934** |
| ອັດຕະປື | 20 895 | - 12 100 | 15 355 | 29 457 | 28 056 | **16 332** |
| **ລວມ** | **790 467** | **1 029 114** | **910 961** | **861 888** | **1 240 947** | **966 675** |

ແຫຼ່ງຂໍ້ມູນ: ຈາກການຄິດໄລ່ຂອງຜູ້ຄົ້ນຄວ້າ.

ຕາຕະລາງທີ 2 ນອກຈາກສະແດງຂໍ້ມູນຄາດຄະເນແຂວງທີ່ມີເຂົ້າເຫຼືອກິນແລ້ວ ຍັງຍົກໃຫ້ເຫັນແຂວງທີ່ຂາດເຂົ້າກິນເລື້ອຍໆ ເຊັ່ນ: ແຂວງຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ, ຫຼວງພະບາງ, ຫົວພັນ ແລະ ຊຽງຂວາງ. ໂດຍໃນນີ້ແຂວງທີ່ມັກຂາດເຂົ້າກິນຫຼາຍກວ່າໝູ່ໂດຍສະເລັ່ຍແຕ່ປີ 2008 - 2012 ແມ່ນແຂວງຫຼວງພະບາງ, ອຸດົມໄຊ, ຫົວພັນ, ຜົ້ງສາລີ, ຊຽງຂວາງ ແລະ ຫຼວງນໍ້າທາ.

### 3.3 ວິເຄາະຄວາມສາມາດໃນການສ້າງຄັງແຮເຂົ້າຂອງບັນດາແຂວງ.

ຖ້າເບິ່ງຄວາມເປັນໄປໄດ້ໃນການສ້າງຄັງແຮເຂົ້າຢູ່ແຂວງໃດໜຶ່ງ ແນ່ນອນແລ້ວຕົວຊີ້ວັດທີ່ສຳຄັນກໍ່ຄືຕົວເລກຂອງປະລິມານເຂົ້າເຫຼືອກິນພາຍໃນແຂວງນັ້ນ ເຊິ່ງແຂວງທີ່ມີຄວາມເປັນໄປໄດ້ຫຼາຍທີ່ສຸດກໍ່ແມ່ນແຂວງທີ່ຕິດອັນດັບໜຶ່ງໃນສິບແຂວງທີ່ມີປະລິມານເຂົ້າເຫຼືອກິນຫຼາຍກ່ວາໝູ່ ດັ່ງສາມາດອະທິບາຍເພີ່ມຕື່ມໃນຮູບສະແດງ 7 ລຸ່ມນີ້.

ຮູບສະແດງ 7: ອັດຕາສ່ວນແບ່ງ 10 ແຂວງທີ່ມີປະລິມານເຂົ້າເຫຼືອກິນສະເລັ່ຍຫຼາຍກວ່າໝູ່ແຕ່ປີ 2008 - 2012




ແຫຼ່ງຂໍ້ມູນ: ຜູ້ຄົ້ນຄວ້າຄິດໄລ່ຈາກສະຖິຕິກະສິກຳ, ກະຊວງກະສິກຳ ແລະ ປ່າໄມ້ (2005-2012) ແລະ ລາຍງານສະຖິຕິປະຈຳປີ

ເມື່ອສັງເກດເບິ່ງຂໍ້ມູນໃນຮູບສະແດງທີ 7 ແລ້ວ ເຫັນວ່າແຕ່ປີ 2008-12 ແຂວງສະຫວັນນະເຂດກວມສ່ວນໃຫຍ່ຂອງສ່ວນແບ່ງປະລິມານເຂົ້າເຫຼືອກິນສະເລັ່ຍຂອງປະເທດ ຄື: ປະມານ 32%, ຮອງລົງມາແມ່ນແຂວງຈຳປາສັກມີ 14%, ແຂວງສາລະວັນ ມີ 13%, ແຂວງວຽງຈັນ 12%, ນະຄອນຫຼວງວຽງຈັນ ມີ 11% ແລະແຂວງທີ່ເຫຼືອມີ 7%, 6%, 2%, 2%, 1% ຕາມລຳດັບ. ດັ່ງນັ້ນ ຖ້າອີງໃສ່ພຽງຕົວເລກປະລິມານເຂົ້າເຫຼືອກິນແລ້ວ ຖືວ່າໃນຈຳນວນ 10 ແຂວງທີ່ກ່າວມາແມ່ນມີຄວາມສາມາດສູງທີ່ຈະເປັນຄັງເຂົ້າຂອງຂົງເຂດ ຫຼື ທົ່ວປະເທດ ແລະ ມີຄວາມເປັນໄປໄດ້ໃນການຈະສົ່ງອອກເຂົ້າໄປຕ່າງປະເທດ ຖ້າຫາກໄດ້ຮັບການສົ່ງເສີມທີ່ເໝາະສົມຈາກພາກລັດ ແລະ ເອກະຊົນ.

## IV. ວິເຄາະຄວາມສາມາດໃນການສົ່ງອອກເຂົ້າຂອງ ສປປ ລາວ.

### 4.1 ສະພາບການສົ່ງອອກເຂົ້າຂອງ ສປປ ລາວ.

ປະຈຸບັນ ສປປ ລາວ ມີທຸລະກິດທີ່ສົ່ງອອກເຂົ້າປະມານ 32 ຫົວໜ່ວຍ (ທຸລະກິດທີ່ເຮັດການສົ່ງອອກເປັນທາງການ) ທີ່ໄດ້ເຮັດການສົ່ງອອກເຂົ້າໄປ 19 ປະເທດໃນໂລກ (ຂໍ້ມູນຈາກຜົນການສຶກສາເບື້ອງຕົ້ນເພື່ອເຮັດໃຫ້ຂັ້ນຕອນການຂໍອະນຸຍາດສົ່ງອອກເຂົ້າງ່າຍຂຶ້ນ, ກະຊວງອຸດສາຫະກຳ ແລະ ການຄ້າປີ 2013, ແລະ ສູນການຄ້າສາກົນ - ITC ປີ 2014); ນອກຈາກນັ້ນ ຈາກລາຍງານທາງດ້ານສະຖິຕິຂອງ ITC ຍັງພົບວ່າປະເທດທີ່ ສປປ ລາວ ມັກສົ່ງເຂົ້າໄປຫຼາຍກວ່າໝູ່ແມ່ນບັນດາປະເທດໂອຣົບ ເຊັ່ນ: ຝຣັ່ງ, ເນເທີແລນ, ເຢັຍລະມັນ ແລະ ເບວຢ້ຽມ; ສ່ວນປະເທດໃນເຂດອາຊີ ແມ່ນປະເທດຫວຽດນາມ, ຈີນ, ໄທ ແລະ ຮ່ອງກົງ. ເປັນທີ່

ສັງເກດວ່າການສົ່ງອອກເຂົ້າຂອງ ສປປ ລາວ ໄປຍັງປະເທດນຳເຂົ້າຕ່າງໆ ແມ່ນມີລັກສະນະບໍ່ຕໍ່ເນື່ອງ ແລະ ມີພຽງຈຳນວນໜ້ອຍທີ່ຖືວ່າເປັນຕະຫຼາດສົ່ງອອກດັ້ງເດີມ ແລະ ຂ້ອນຂ້າງໝັ້ນຄົງຂອງລາວ ເຊັ່ນ: ປະເທດຫວຽດນາມ, ຝຣັ່ງ, ເຢັຍລະມັນ ແລະເບວ ຢ້ຽມ. ແຕ່ເຖິງຢ່າງໃດກໍ່ດີ ໃນປີ 2012 ຖືວ່າເປັນປີທີ່ ສປປ ລາວ ມີການຂະຫຍາຍຕະຫຼາດສົ່ງອອກເຂົ້າໄດ້ຫຼາຍກວ່າທຸກປີຜ່ານມາ ເຊິ່ງສາມາດສົ່ງອອກໄປຕະຫຼາດໃໝ່ໄດ້ 9 ປະເທດຢູ່ເຂດຢູໂຣບ (ເບິ່ງຕາຕະລາງ 3).

**ຕາຕະລາງ 3: ຕະຫຼາດສົ່ງອອກປະເພດເຂົ້າທີ່ສີແລ້ວ ຫຼື ເຂົ້າທີ່ສີບໍ່ລະອຽດ, ຈະຂັດໃຫ້ຂາວຫຼືບໍ່ກໍ່ຕາມ (ຕາມລະຫັດພາສີ HS 1006.30) ຂອງ ສປປ ລາວ**

ຫົວໜ່ວຍ: 1 000 ໂດລາ

| ລ/ດ | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 | 2009 | 2010 | 2011 | 2012 |
|---|---|---|---|---|---|---|---|---|---|---|---|---|
| ຫວຽດນາມ (Viet Nam) | 8 | 150 | 286 | 822 | 2644 | 3568 | 817 | 1220 | 13020 | 4506 | 362 | 0 |
| ຝຣັ່ງ (France) | 0 | 0 | 0 | 14 | 50 | 97 | 222 | 127 | 111 | 557 | 970 | 619 |
| ເນເທີແລນ (Netherlands) | 0 | 0 | 0 | 0 | 0 | 0 | 0 | 0 | 0 | 252 | 230 | 89 |
| ເຢັຍລະມັນ (Germany) | 17 | 7 | 13 | 12 | 15 | 5 | 24 | 15 | 24 | 23 | 159 | 205 |
| ເບວຢ້ຽມ (Belgium) | 0 | 0 | 0 | 0 | 0 | 25 | 31 | 34 | 38 | 37 | 144 | 52 |
| ຈີນ (China) | 121 | 58 | 0 | 108 | 0 | 6 | 0 | 0 | 0 | 0 | 0 | 0 |
| ອັງກິດ (UK) | 0 | 0 | 0 | 0 | 0 | 0 | 8 | 0 | 0 | 0 | 48 | 154 |
| ອິດຕາລີ້ (Italy) | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 197 |
| ອັອດສເຕັຍ (Austria) | 0 | 0 | 15 | 13 | 8 | 0 | 0 | 0 | 0 | 0 | 0 | 140 |
| ສະເປນ (Spain) | 0 | 0 | 0 | 0 | 0 | 0 | 0 | 0 | 0 | 83 | 0 | 76 |
| ໄທ (Thailand) | 0 | 0 | 25 | 53 | 0 | 0 | 3 | 0 | 6 | 0 | 21 | 2 |
| ປອກຕຸຍການ (Portugal) | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 94 |
| ກົດເດວົວ (Côte d'Ivoire) | 0 | 0 | 0 | 0 | 0 | 0 | 2 | 0 | 0 | 0 | 71 | 0 |
| ຮ່ອງກົງ, ຈີນ (Hong Kong, China) | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 54 |
| ສະວິດເຊີແລນ (Switzerland) | 17 | 0 | 0 | 9 | | 7 | 9 | 4 | 0 | 0 | 0 | 0 |
| ໄນເຢີ (Niger) | 42 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| ແດນມາກ (Denmark) | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 45 |
| ການາດາ (canada) | 0 | 0 | 14 | 0 | 0 | 0 | 0 | 3 | 1 | 0 | 0 | 0 |
| ໂປແລນ (Poland) | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 12 |
| **ລວມທັງໝົດ** | **205** | **215** | **353** | **1031** | **2717** | **3708** | **1116** | **1403** | **13200** | **5458** | **2005** | **1739** |

ແຫຼ່ງຂໍ້ມູນ: ຈາກສະຖິຕິຂອງສູນການຄ້າສາກົນ (ITC), 2014.

ອີງໃສ່ຂໍ້ມູນໃນຕາຕະລາງ 3 ເຫັນວ່າໂດຍລວມຕະຫຼາດສົ່ງອອກເຂົ້າຂອງ ສປປ ລາວ ໃນຊຸມປີຜ່ານມາເຫັນວ່າມີການຂະຫຍາຍຕົວຈາກມີພຽງປະເທດຄູ່ຄ້າ 5 ປະເທດໃນປີ 2005, ມາເປັນ 13 ປະເທດໃນປີ 2012. ແຕ່ວ່າ ການຖ້າເບິ່ງມູນຄ່າສົ່ງເຂົ້າອອກຂອງລາວໄປຍັງບັນດາຕະຫຼາດຄູ່ຄ້າຕ່າງໆແລ້ວ ຈະພົບວ່າ ມູນຄ່າສົ່ງເຂົ້າອອກຂອງລາວແມ່ນຍັງໜ້ອຍ ແລະ ຂະຫຍາຍຕົວຊ້າ; ພ້ອມກັນນັ້ນ ກໍ່ເຫັນວ່າ ຈັງວະການຂະ ຫຍາຍຂອງ ຕະຫຼາດສົ່ງອອກໄລຍະແຕ່ປີ 2001 ຫາ 2012 ແມ່ນບໍ່ໝັ້ນຄົງ (ເບິ່ງຮູບສະແດງ 8); ການສົ່ງອອກເພີ່ມຂຶ້ນໃນຊ່ວງປີ 2001 ຫາ 2006 ແຕ່ຫຼຸດລົງໃນປີ 2007; ປີ 2009 ຖືວ່າເປັນປີທີ່ມີມູນຄ່າສົ່ງເຂົ້າອອກຫຼາຍທີ່ສຸດ ໂດຍສະເພາະແມ່ນ ການສົ່ງໄປປະເທດຫວຽດນາມ ແຕ່ປີທັດມາມູນຄ່າການສົ່ງອອກແມ່ນຫຼຸດລົງກວ່າເຄິ່ງ ແລະ ປີ 2012 ເຖິງວ່າຈະເປັນປີທີ່ມີການສົ່ງເຂົ້າອອກໄປຕ່າງປະເທດຫຼາຍກວ່າທຸກປີຜ່ານມາ ແຕ່ມູນຄ່າການສົ່ງອອກແມ່ນໜ້ອຍຫຼາຍຖ້າທຽບກັບປີ 2009 ແລະ 2010 ທີ່ມີຈຳນວນຂອງຕະຫຼາດພຽງ 6 ປະເທດ ແລະ ປີ 2011 ມີ 8 ປະເທດ.

ຮູບສະແດງ 8: ສັງລວມມູນຄ່າສົ່ງອອກເຂົ້າສານຂອງລາວ (HS1006.30)




ແຫຼ່ງຂໍ້ມູນ: ຄິດໄລ່ຈາກຂໍ້ມູນ ITC ຂອງຜູ້ຄົ້ນຄວ້າ.

**4.2 ຕະຫຼາດເຂົ້າໂລກ ແລະ ຄວາມອາດສາມາດໃນການຂະຫຍາຍຕະຫຼາດສົ່ງອອກເຂົ້າຂອງ ສປປ ລາວ.**

**ກ. ສະພາບການຄ້າເຂົ້າໃນສາກົນ.**

ຈາກສະຖິຕິຂອງສູນການຄ້າສາກົນ (ITC) ປີ 2012 ພົບວ່າທົ່ວໂລກມີປະເທດທີ່ສົ່ງເຂົ້າສານອອກ ແລະ ນຳເຂົ້າເຂົ້າສານ ລະຫັດ HS 1006.30 (ປະເພດເຂົ້າທີ່ສີແລ້ວ ຫຼື ເຂົ້າທີ່ສີບໍ່ລະອຽດ, ຈະຂັດໃຫ້ຂາວຫຼືບໍ່ກໍ່ຕາມ) ແມ່ນມີຈຳນວນ 191 ປະເທດສົ່ງອອກ ແລະ 231 ປະເທດນຳເຂົ້າ. ສປປ ລາວ ແມ່ນຢູ່ໃນອັນດັບທີ່ 62 ຂອງປະເທດທີ່ສົ່ງອອກເຂົ້າລະຫັດ HS 1006.30 ຂອງໂລກ ມີມູນຄ່າສົ່ງອອກລວມ 1.739.000 ໂດລາ ຫຼື ປະມານ 13.912.000.000 ກີບ ແລະ ມີອັດຕາສ່ວນແບ່ງໃນຕະຫຼາດໂລກເທົ່າ 0.01% ໃນປີ 2012. ແຕ່ເຖິງຢ່າງໃດກໍ່ດີ ພາຍໃຕ້ລະຫັດເຂົ້ານີ້ ແມ່ນບໍ່ໄດ້ແຍກປະເພດ ເຂົ້າຈ້າວ ຫຼື ເຂົ້າໜຽວ ດັ່ງນັ້ນໃນການວິເຄາະຂ້າງລຸ່ມນີ້ຈຶ່ງໝາຍເຖິງເຂົ້າລວມ.

ປະເທດທີ່ຄ້າເຂົ້າລະຫັດ HS 1006.30 ໃຫຍ່ໃນ 10 ອັນດັບທຳອິດຂອງໂລກໃນປີ 2012 ແມ່ນປະເທດ ອິນເດຍ, ໄທ, ຫວຽດ ນາມ, ອາເມລິກາ, ອິດຕາລີ້, ອູລູໄກວ, ອິດສະຕາລີ້, ອາເຈນຕີນ້າ, ເບວຍ້ຽວ ແລະ ຈີນ; ບັນດາປະເທດສົ່ງອອກ ເຫຼົ່ານີ້ໄດ້ແມ່ນມີອັດຕາສ່ວນແບ່ງໃນຕະຫຼາດໂລກເຖິງ 82% ໂດຍນີ້ ປະເທດອິນເດຍ, ໄທ ແລະ ຫວຽດນາມ ກວມອັດ ຕາສ່ວນໃຫຍ່ກວ່າໝູ່ ຄືປະມານ 31%, 22% ແລະ 13% ຕາມລຳດັບ (ເບິ່ງຮູບສະແດງ 4ກ). ສ່ວນ 10 ອັນດັບທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນ ປະເທດ ໄນເຢີເລຍ, ອີລານ, ສາອູດິ ອາລາເບຍ, ອີລັກ, ອາເມລິກາ, ມາເລເຊຍ, ຍີ່ປຸ່ນ, ຟີລິບປິນ, ຝຼັ່ງ ແລະ ຮ່ອງກົງ; ທັງໝົດກວມ 38% ຂອງການນຳເຂົ້າຂອງໂລກ ແລະ ປະເທດທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນປະເທດ ໄນເຢີເລຍ ກວມປະມານ 8%, ປະເທດອີລານ, ສາອູດິ ອາລາເບຍ, ແລະ ອີລັກ ໂດຍແຕ່ລະປະເທດກວມເອົາປະມານ 5% ຂອງມູນຄ່ານຳເຂົ້າຂອງໂລກ (ເບິ່ງຮູບສະແດງ 4ຂ).

| ຕາຕະລາງ 4ກ: ລາຍຊື່ 10 ປະເທດສົ່ງອອກເຂົ້າ ຕາມລະຫັດພາສີ HS 1006.30ໃຫຍ່ສຸດຂອງໂລກ | | |
|---|---|---|
| ລ/ດ | ມູນຄ່າສົ່ງອອກ ປີ 2012 (1 000 ໂດລາ) | ສ່ວນແບ່ງໃນ ຕະຫຼາດໂລກ (%) |
| ອິນເດຍ (India) | 5 710 316 | 31 |
| ໄທ (Thailand) | 4 053 027 | 22 |
| ຫວຽດນາມ (Vietnam) | 2 341 887 | 13 |
| ອາເມລິກາ (USA) | 1 321 910 | 7 |
| ອິດຕາລີ້ (Italy) | 522 070 | 3 |
| ອູລູໄກວ (Uruguay) | 416 301 | 2 |
| ອົດສະຕາລີ້ (Australia) | 336 136 | 2 |
| ອາເຈນຕີນ້າ (Argentina) | 186 964 | 1 |
| ເບວຢຽມ (Belgium) | 171 817 | 1 |
| ຈີນ (China) | 165 024 | 1 |
| ລວມບັນດາປະເທດທີ່ເຫຼືອ | 3 419 845 | 18 |

| ຕາຕະລາງ 4ຂ: ລາຍຊື່ 10 ປະເທດນໍາເຂົ້າເຂົ້າ ຕາມລະຫັດພາສີ HS 1006.30ໃຫຍ່ສຸດຂອງໂລກ | | |
|---|---|---|
| ລ/ດ | ມູນຄ່ານໍາເຂົ້າ ປີ 2012 (1 000 ໂດລາ) | ສ່ວນແບ່ງໃນ ຕະຫຼາດໂລກ (%) |
| ໄນເຈີເລຍ (Nigeria) | 1 466 448 | 8 |
| ອີລານ (Iran) | 980 562 | 5 |
| ສາອູດີ ອາລາເບັຍ (Saudi Arabia) | 965 020 | 5 |
| ອີລັກ (Iraq) | 839 921 | 5 |
| ອາເມລິກາ (USA) | 629 955 | 3 |
| ມາເລເຊຍ (Malaysia) | 599 986 | 3 |
| ຍີ່ປຸ່ນ (Japan) | 427 981 | 2 |
| ຟີລິບປິນ (Philippines) | 405 661 | 2 |
| ຝຣັ່ງ (France) | 313 788 | 2 |
| ຮ່ອງກົງ (Hong Kong, China) | 296 926 | 2 |
| ລວມບັນດາປະເທດທີ່ເຫຼືອ | 11 163 510 | 62 |

ແຫຼ່ງຂໍ້ມູນ: ຈາກສະຖິຕິຂອງສູນການຄ້າສາກົນ (ITC), 2014.

ນອກຈາກປະເພດເຂົ້າໃນລະຫັດ HS 1006.30 ທີ່ກ່າວມາແລ້ວ ປະເພດເຂົ້າທີ່ນິຍົມຄ້າຂາຍຫຼາຍໃນໂລກ ຮອງລົງມາກໍ່ແມ່ນປະເພດເຂົ້າລະຫັດ HS 1006.40 (ປາຍເຂົ້າ) ແລະກໍ່ເຊັ່ນດຽວກັບລະຫັດ HS 1006.30 ລະຫັດນີ້ ກໍ່ບໍ່ໄດ້ແຍກປະເພດເຂົ້າໜຽວ ຫຼື ເຂົ້າຈ້າວ ດັ່ງນັ້ນການວິເຄາະລຸ່ມນີ້ຈຶ່ງໝາຍເຖິງເຂົ້າໂດຍລວມ. ການຄ້າເຂົ້າປະເພດປາຍ ເຂົ້າ ໂດຍທົ່ວໄປຈະລວມມີປະເພດປາຍເຂົ້າເມັດຫັກ 5% ແລະ 25% ແຕ່ວ່າໃນການວິເຄາະລຸ່ມນີ້ແມ່ນບໍ່ໄດ້ໄຈ້ແຍກ ຊະນິດຂອງປາຍເຂົ້າທີ່ກ່າວມາ (ເພາະບໍ່ມີຂໍ້ມູນ).

ອີງຕາມຂໍ້ມູນທີ່ສະແດງໃນຕາຕະລາງ 5ກ ເຫັນວ່າປະເທດທີ່ສົ່ງອອກເຂົ້າລະຫັດ HS 1006.40 ລາຍໃຫຍ່ 10 ອັນດັບຕົ້ນຂອງປີ 2012 ແມ່ນລວມມີປະເທດໄທ, ອິນເດຍ, ຫວຽດນາມ, ປາກິດສະຖານ, ເມຼຊິນ, ພະມ້າ, ເບວຢັຽມ, ອູລູໄກວ, ເຊນາກ້ານ ແລະ ອິດຕາລີ້. ສໍາລັບ 10 ປະເທດທີ່ເປັນຜູ້ນໍາເຂົ້າລາຍໃຫຍ່ຂອງໂລກແມ່ນ ເຊເນກ້ານ, ການ້າ, ໄນເຈີເລຍ, ກົດເຕວີວ, ກິວນີ, ຈີນ, ອິນໂດເນເຊຍ, ຊິມບາເວ, ເບວຢັຽມ ແລະ ເບີກີນາຟາໂຊ້ (ເບິ່ງຮູບສະແດງ 5ຂ). ປາຍເຂົ້າ ຫຼື ມັກເອີ້ນທົ່ວໄປວ່າເຂົ້າເມັດຫັກແມ່ນອີກປະເພດເຂົ້າໜຶ່ງທີ່ ສປປ ລາວ ໄດ້ສົ່ງອອກເຊັ່ນກັນ ແຕ່ການສົ່ງອອກຂອງ ສປປ ລາວ ແມ່ນມີໜ້ອຍຄືປະມານ 84.000 ໂດລາ ຫຼື ປະມານ 672.000.000 ກີບ; ຢືນໃນອັນດັບປະເທດທີ 62 ໃນຈໍານວນ 155 ປະເທດທີ່ສົ່ງອອກເຂົ້າປະເພດນີ້ ແລະ ມີອັດຕາສ່ວນແບ່ງໃນຕະຫຼາດໂລກພຽງ 0.005%.

| ຕາຕະລາງ 5ກ: ລາຍຊື່ 10 ປະເທດສົ່ງອອກເຂົ້າ ຕາມລະຫັດພາສີ HS 1006.40ໃຫຍ່ສຸດຂອງໂລກ | | |
|---|---|---|
| ລ/ດ | ມູນຄ່າສົ່ງອອກ ປີ 2012 (1 000 ໂດລາ) | ສ່ວນແບ່ງ ໃນຕະຫຼາດ ໂລກ (%) |
| ໄທ (Thailand) | 392 167 | 22 |
| ອິນເດຍ (India) | 286 401 | 16 |
| ຫວຽດນາມ (Viet Nam) | 270 196 | 15 |
| ປາກິດສະຖານ (Pakistan) | 258 875 | 14 |
| ເບຼຊິນBrazil | 103 139 | 6 |
| ພະມ້າ (Myanmar) | 81 304 | 5 |
| ເບວຢ້ຽມ (Belgium) | 44 862 | 2 |
| ອູລູໄກວ (Uruguay) | 42 341 | 2 |
| ເຊນາກ້ານ (Senegal) | 41 839 | 2 |
| ອິດຕາລີ້ (Italy) | 34 271 | 2 |
| ລວມບັນດາປະເທດທີ່ເຫຼືອ | 246 547 | 14 |

| ຕາຕະລາງ 5ຂ: ລາຍຊື່ 10 ປະເທດນຳເຂົ້າເຂົ້າ ຕາມລະຫັດພາສີ HS 1006.40ໃຫຍ່ສຸດຂອງໂລກ | | |
|---|---|---|
| ລ/ດ | ມູນຄ່ານຳເຂົ້າປີ 2012 (1 000 ໂດລາ) | ສ່ວນແບ່ງ ໃນຕະຫຼາດ ໂລກ (%) |
| ເຊນາກ້ານ (Senegal) | 448 592 | 19 |
| ການ້າ (Ghana) | 218 049 | 9 |
| ໄນເຈີເລຍ (Nigeria) | 161 706 | 7 |
| ກົດເດວົວ (Côte d'Ivoire) | 159 550 | 7 |
| ກີວນີ (Guinea) | 126 130 | 5 |
| ຈີນ (China) | 109 855 | 5 |
| ອິນໂດເນເຊຍ (Indonesia) | 96 825 | 4 |
| ຊິມບາເວ (Zimbabwe) | 91 022 | 4 |
| ເບວຢ້ຽມ (Belgium) | 81 885 | 3 |
| ເບີກີນາ ຟາໂຊBurkina Faso | 64 934 | 3 |
| ລວມບັນດາປະເທດທີ່ເຫຼືອ | 790 318 | 34 |

ແຫຼ່ງຂໍ້ມູນ: ຈາກສະຖິຕິຂອງສູນການຄ້າສາກົນ (ITC), 2014.

ສະຫຼຸບລວມແລ້ວການຄ້າເຂົ້າຂອງ ສປປ ລາວ ແມ່ນຍັງບໍ່ຫຼາຍໃນຕະຫຼາດໂລກ. ການສົ່ງອອກເຂົ້າລະຫັດ **HS** 1006.30 ທີ່ໝາຍເຖິງປະເພດເຂົ້າທີ່ສີແລ້ວ ຫຼື ເຂົ້າທີ່ສີບໍ່ລະອຽດ ກວມອັດຕາສ່ວນຂອງຕະຫຼາດໂລກພຽງ 0.01% ແລະ ຖ້າເບິ່ງແຍກລົງລະອຽດຕື່ມ ໃນປະເພດເຂົ້າລະຫັດ HS 1006.40 ຫຼື ປາຍເຂົ້າແມ່ນມີອັດຕາສ່ວນແບ່ງໃນຕະຫຼາດໂລກໜ້ອຍຫຼາຍຄືປະມານ 0.005% ເທົ່ານັ້ນ. ເຖິງແມ່ນວ່າ ສປປ ລາວ ຈະມີອັດຕາສ່ວນແບ່ງໃນຕະຫຼາດໂລກບໍ່ຫຼາຍ ແຕ່ວ່າໃນຊຸມປີຜ່ານມາການສົ່ງອອກຂອງ ສປປ ລາວ ໂດຍລວມຖືວ່າຍັງມີການຂະຫຍາຍຕົວພໍສົມຄວນ ບໍ່ວ່າທາງດ້ານມູນຄ່າ ກໍ່ຄືຈຳນວນຂອງຕະຫຼາດ (ເບິ່ງຕາຕະລາງ 3). ດັ່ງນັ້ນ ຄຳຖາມທີ່ຈະຖືກຕັ້ງຂຶ້ນມາກໍ່ແມ່ນ ສປປ ລາວ ຈະສາມາດຂະຫຍາຍຕະຫຼາດຂອງຕົນໄດ້ຕື່ມຫຼືບໍໃນຕໍ່ໜ້າ? ການຕອບຄຳຖາມນີ້ໃຫ້ໄດ້ດີ ກໍ່ແມ່ນການສຶກສາ ຕະຫຼາດທີ່ຈະເປັນທ່າແຮງ ແລະ ຄວາມສາມາດໃນການແຂ່ງຂັນຂອງ ສປປ ລາວ ໃນຕະຫຼາດດັ່ງກ່າວ ເຊິ່ງ ຂໍ້ ຂ ລຸ່ມນີ້ ຈະໄດ້ເຮັດການວິເຄາະໃນບັນຫາເຫຼົ່ານີ້.

## ຂ. ການສຶກສາຄວາມອາດສາມາດໃນການແຂ່ງຂັນຂອງ ສປປ ລາວ

ການສຶກສາຄວາມອາດສາມາດໃນການແຂ່ງຂັນສາມາດແບ່ງອອກເປັນສອງພາກວິເຄາະ ຄື ພາກການວິເຄາະຕະຫຼາດປະຈຸບັນ ແລະ ພາກວິເຄາະຕະຫຼາດເປົ້າໝາຍຂອງ ສປປ ລາວ. ຕະຫຼາດປະຈຸບັນແມ່ນຕະຫຼາດທີ່ປະເທດລາວ ໄດ້ເຮັດການສົ່ງອອກໄປເປັນປະຈຳໃນໄລຍະຜ່ານມາ ສ່ວນຕະຫຼາດເປົ້າໝາຍແມ່ນໝາຍເຖິງຕະຫຼາດທີ່ອາດຈະສາມາດ ເປັນຕະຫຼາດໃໝ່ຂອງລາວໃນການສົ່ງເຂົ້າໄປຂາຍໃນອານາຄົດ.

### 1) ຕະຫຼາດສົ່ງອອກເຂົ້າປະຈຸບັນຂອງລາວ:

ດັ່ງທີ່ໄດ້ສະເໜີມາກ່ອນໜ້ານີ້ ຕະຫຼາດທີ່ລາວໄດ້ສົ່ງເຂົ້າໄປຂາຍໃນໄລຍະຜ່ານມາແມ່ນຕະຫຼາດຫວຽດນາມ, ຮົງກົງ, ຝຣັ່ງ, ເຢຍລະມັນ, ເນເທີແລນ, ແລະ ເບວຢ້ຽມ. ດັ່ງນັ້ນ ໃນການວິເຄາະຕະຫຼາດໂດຍການສຶກສາສ່ວນແບ່ງໃນຕະຫຼາດ, ອັດຕາຄວາມສາມາດໃນການແຂ່ງຂັນ (RCA)[2] ແລະ ອັດພາສີນຳເຂົ້າຂອງບັນດາປະເທດຄູ່ຄ້າທີ່ກ່າວມາ ແມ່ນ ຖືກສັງລວມໃນຕາຕະລາງ 6 ລຸ່ມນີ້:

[2]Revealed Comparative Advantage (RCA) = $(x^k_{ij}/X_{ij})/(x^k_{wj}/X_{wj})$

$x^k_{ij}$ ປະເທດ i ສົ່ງອອກສິນຄ້າ k ໄປປະເທດ j. $X_{ij}$ ມູນຄ່າທັງໝົດທີ່ປະເທດ i ສົ່ງອອກໄປປະເທດ j

$x^k_{wj}$ ທົ່ວໂລກສົ່ງສິນຄ້າ k ໄປປະເທດ j. $X_{wj}$ ມູນຄ່າການສົ່ງສິນຄ້າຂອງທົ່ວໂລກໄປປະເທດ j

ຕາຕະລາງ 6: ການສັງລວມການວິເຄາະຕະຫຼາດປະຈຸບັນຢູ່ 6 ປະເທດ.

| ລ/ດ | ຫວຽດນາມ (2011) $1.089.000 | | | ລ/ດ | ໄທ (2012) $9,589,000 | | | ລ/ດ | ຝຼັ່ງ (2012) $313.788.000 | | |
|---|---|---|---|---|---|---|---|---|---|---|---|
| | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) | | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) | | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) |
| ລາວ | 33,2 | 77,14 | 5 | ລາວ | 0,02 | 0,04 | 0 | ລາວ | 0,2 | 74,19 | 0 |
| ໄທ | 47,5 | 7,94 | 5 | ປາກິດສະຖານ | 4,93 | 116,69 | 0 | ອິດຕາລີ້ | 32,07 | 4,51 | 0 |
| ອິດຕາລີ້ | 1,3 | 1,37 | 0 | ອິນເດຍ | 2,87 | 2,22 | 0 | ໄທ | 18,47 | 44,36 | 22,15 |
| ອິນເດຍ | 0,3 | 0,13 | 0 | ນໍເວ | 4,64 | 29,41 | 0 | ກຳປູເຈຍ | 12,19 | 307 | 0 |

| ລ/ດ | ເນເທີແລນ (2012) $89.960.000 | | | ລ/ດ | ເຢັຍລະມັນ (2012) $218.338.000 | | | ລ/ດ | ເບວຢ້ຽມ (2012) $70.494.000 | | |
|---|---|---|---|---|---|---|---|---|---|---|---|
| | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) | | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) | | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) |
| ລາວ | 0,10 | 13 | 0 | ລາວ | 0,09 | 14 | 0 | ລາວ | 0,07 | 18,55 | 0 |
| ໄທ | 20,19 | 33 | 22,15 | ອິດຕາລີ້ | 38,04 | 7,06 | 0 | ອິນເດຍ | 17,82 | 14,39 | 22,15 |
| ສະເປນ | 17,64 | 10,13 | 0 | ເນເທີແລນ | 19,65 | 2,08 | 0 | ໄທ | 17,46 | 46 | 22,15 |
| ກຳປູເຈຍ | 12,75 | 734,86 | 0 | ໄທ | 8,11 | 17,61 | 22,15 | ຝຼັ່ງ | 14,89 | 1,42 | 0 |

ແຫຼ່ງຂໍ້ມູນ: ຜູ້ຄົ້ນຄວ້າວິເຄາະເອງໂດຍໃຊ້ຂໍ້ມູນຈາກ ITC.

ຈາກຜົນການສຶກສາທີ່ສະແດງໃນຕາຕະລາງ 6 ຂ້າງເທິງ ຫົກປະເທດທີ່ ສປປ ລາວ ສົ່ງເຂົ້າໄປຂາຍ ແມ່ນມີມູນຄ່າການນຳເຂົ້າເຂົ້າກົນລະຫັດພາສີ HS1006.30 ໃນແຕ່ລະປີເປັນມູນຄ່າຫຼາຍລ້ານໂດລາ (ຕົວຢ່າງ: ຝຼັ່ງ ແລະ ເຢຍລະມັນນຳເຂົ້າເຂົ້າປີ 2012 ມູນຄ່າ 313.788.000 ແລະ 218.338.000 ໂດລາ) ແຕ່ ສປປ ລາວ ມີສ່ວນແບ່ງໃນຕະຫຼາດໜ້ອຍຫຼາຍ (ຍົກເວັ້ນ ປະເທດຫວຽດນາມ) ເຖິງວ່າ ສປປ ລາວ ຈະມີຄ່າຄວາມສາມາດໃນການແຂ່ງຂັນໂດຍປຽບທຽບ ຫຼາຍກວ່າ 1 ຢູ່ເກືອບທຸກປະເທດຄູ່ຄ້າທີ່ລາວໄດ້ສົ່ງເຂົ້າໄປຂາຍ (ຍົກເວັ້ນປະເທດໄທ) ເຊິ່ງໝາຍຄວາມວ່າ ສປປ ລາວ ແມ່ນມີຄວາມສາມາດໃນ ການແຂ່ງຂັນກັບຄູ່ແຂ່ງໃນຕະຫຼາດເຫຼົ່ານັ້ນສູງ. ນອກຈາກນັ້ນ ອັດຕາພາສີນຳເຂົ້າທີ່ ສປປ ລາວ ໄດ້ຮັບ ຈາກ ປະເທດຜູ້ນຳເຂົ້າໃນອັດຕາສູນເປີເຊັນ ກໍ່ເປັນອີກປັດໄຈໜຶ່ງທີ່ຊ່ວຍເຮັດໃຫ້ການແຂ່ງຂັນຂອງລາວຢູ່ແຕ່ລະຕະຫຼາດມີຄວາມໄດ້ປຽບເພີ່ມຂຶ້ນ.

ແຕ່ເຖິງຢ່າງໃດກໍ່ດີ ຕົວເລກທີ່ສະແດງໃນຕາຕະລາງ 6 ແມ່ນຂໍ້ມູນພື້ນຖານຂອງການສຶກສາຕະຫຼາດສົ່ງອອກ ເຂົ້າຂອງລາວ ຕົວເລກໄດ້ຊີ້ບອກເຖິງຄວາມສາມາດຂອງປະເທດລາວໂດຍລວມໃນການແຂ່ງຂັນ ແຕ່ບໍ່ໄດ້ໝາຍເຖິງ ພຶດຕິກຳພາຍໃນຂອງຕະຫຼາດເຫຼົ່ານັ້ນ ເຊິ່ງອາດມີຫຼາຍສິ່ງທ້າທາຍຕໍ່ກັບຜູ້ປະກອບການສົ່ງອອກເຂົ້າຂອງລາວ ເຊັ່ນ: ລະບຽບການດ້ານສຸຂະອານາໄມພືດ, ຄຸນນະພາບຂອງເຂົ້າ, ການແຂ່ງຂັນທາງດ້ານລາຄາ ແລະ ລົດນິຍົມຂອງຜູ້ບໍລິ ໂພກ. ດັ່ງນັ້ນ ເພື່ອສາມາດຂະຫຍາຍປະລິມານການສະໜອງໃຫ້ໄດ້ຫຼາຍຂຶ້ນນັ້ນ ຜູ້ປະກອບການສົ່ງອອກເຂົ້າຂອງລາວ ຕ້ອງໄດ້ມີການສຶກສາຕະຫຼາດຕົວຈິງເພື່ອຊອກຫາຄູ່ຄ້າທີ່ເຂັ້ມແຂງທາງດ້ານການເງິນ ແລະ ຕະຫຼາດຈຳໜ່າຍທີ່ໝັ້ນຄົງ.

**2). ຕະຫຼາດສົ່ງອອກເຂົ້າເປົ້າໝາຍໃນອານາຄົດຂອງລາວ.**

ກ່ອນອື່ນຕ້ອງໄດ້ກຳນົດຕະຫຼາດເປົ້າໝາຍທີ່ຈະເຮັດການສຶກສາ ເພາະໃນໂລກມີຫຼາຍປະເທດທີ່ນຳເຂົ້າເຂົ້າ ແລະ ກໍ່ບໍ່ເປັນການງ່າຍທີ່ຈະຕ້ອງສຶກສາທຸກໆປະເທດທີ່ນຳເຂົ້າເຂົ້າຂອງໂລກ; ດັ່ງນັ້ນພາຍໃຕ້ຂອບເຂດຂອງການສຶກສາໃນຄັ້ງນີ້ ການເລືອກປະເທດເປົ້າໝາຍຈຶ່ງອີງໃສ່ການຕັ້ງເງື່ອນໄຂຂອງການຄັດເລືອກປະເທດທີ່ຈະເຮັດການວິເຄາະໃນພາກນີ້. ເງື່ອນໄຂແມ່ນປະກອບມີ: **1)** ປະເທດເປົ້າໝາຍຕ້ອງແມ່ນປະເທດທີ່ຢູ່ໃນຂົງເຂດດຽວກັບລາວ, **2)** ມີການໃຫ້ສິດທິພິ ເສດທາງດ້ານການຄ້າຕໍ່ກັນ ແລະ **3)** ເປັນປະເທດທີ່ນຳເຂົ້າລາຍໃຫຍ່ຂອງໂລກ ແລະ/ຫຼື ບໍ່ທັນມີການສົ່ງເຂົ້າຈາກລາວໃນ ປະຈຸບັນເທື່ອ.

ຈາກສາມຂໍ້ເງື່ອນໄຂທີ່ຕັ້ງຂຶ້ນ ແລະ ຂໍ້ມູນທີ່ໄດ້ນຳສະເໜີມາຢູ່ຂໍ້ ກ ຜ່ານມາ ປະເທດທີ່ສາມາດເປັນເປົ້າໝາຍ ຂອງລາວໃນການສົ່ງອອກເຂົ້າໃນຕໍ່ໜ້າລວມມີ: ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ຮ່ອງກົງ ແລະ ຈີນ. ການວິເຄາະ ແຕ່ລະຕະຫຼາດເປົ້າໝາຍແມ່ນໄດ້ເຮັດຄືກັນກັບການວິເຄາະຕະຫຼາດປະຈຸບັນ ໂດຍສະເພາະສ່ວນແບ່ງ, ອັດຕາການຄວາມ ສາມາດປຽບທຽບໃນການແຂ່ງຂັນ ແລະ ອັດຕາພາສີນຳເຂົ້າ. ຜົນການວິເຄາະໄດ້ສະແດງໃນຕາຕະລາງ 7 ລຸ່ມນີ້.

ຕາຕະລາງ 7: ການສັງລວມການວິເຄາະຕະຫຼາດໃໝ່ຢູ່ປະເທດ 6 ປະເທດ.

| ລ/ດ | ມາເລເຊຍ (2012) $599.986.000 | | |
|---|---|---|---|
| | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) |
| ລາວ | 0 | 0 | 40 |
| ຫວຽດນາມ | 69,79 | 26,32 | 40 |
| ໄທ | 12,09 | 2,02 | 40 |
| ປາກິດສະຖານ | 11,52 | 89,63 | 40 |

| ລ/ດ | ອິນໂດເນເຊຍ (2012) $819.603.000 | | |
|---|---|---|---|
| | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) |
| ລາວ | 0 | 0 | 6,05 |
| ຫວຽດນາມ | 66,43 | 49,07 | 6,06 |
| ໄທ | 21,8 | 3,65 | 6,07 |
| ອິນໂດເນເຊຍ | 11,1 | 4,93 | 6,08 |

| ລ/ດ | ຟີລິບປິນ (2012) $405.661.000 | | |
|---|---|---|---|
| | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) |
| ລາວ | 0 | 0 | 45 |
| ຫວຽດນາມ | 84,6 | 54,11 | 45 |
| ອິນເດຍ | 7,8 | 7,11 | 45 |
| ປາກິດສະຖານ | 3 | 26,29 | 45 |

| ລ/ດ | ຈີນ (2012) $1.006.903.000 | | |
|---|---|---|---|
| | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) |
| ລາວ | 0 | 0 | 65 |
| ຫວຽດນາມ | 62,59 | 70,12 | 65 |
| ປາກິດສະຖານ | 23,02 | 133,27 | 65 |
| ໄທ | 13,29 | 6,23 | 65 |

| ລ/ດ | ຮ່ອງກົງ (2012) $296.926.000 | | |
|---|---|---|---|
| | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) |
| ລາວ | 0,02 | 34,29 | 0 |
| ໄທ | 60,02 | 31,29 | 0 |
| ຫວຽດນາມ | 26,8 | 30,62 | 0 |
| ຈີນ | 7 | 0,15 | 0 |

| ລ/ດ | ຍີ່ປຸ່ນ (2012) $480.975.000 | | |
|---|---|---|---|
| | ສ່ວນແບ່ງໃນຕະຫຼາດ (%) | RCA | ພາສີນຳເຂົ້າ (%) |
| ລາວ | 0 | 0 | 0 |
| ອາເມລິກາ | 54,35 | 6,29 | 0 |
| ໄທ | 31,27 | 11,82 | 0 |
| ຈີນ | 6,84 | 0,32 | 0 |

ແຫຼ່ງຂໍ້ມູນ: ຜູ້ຄົ້ນຄວ້າວິເຄາະເອງໂດຍໃຊ້ຂໍ້ມູນຈາກ ITC.

ຈາກຂໍ້ມູນໃນຕາຕະລາງ 7 ສະແດງໃຫ້ເຫັນວ່າ 5 ໃນ 6 ປະເທດທີ່ເລືອກເປັນເປົ້າໝາຍຂອງຂະຫຍາຍການສົ່ງ ອອກຂອງ ສປປ ລາວ ໃນອານາຄົດແມ່ນປະເທດທີ່ລາວບໍ່ເຄີຍມີການສົ່ງເຂົ້າໄປຂາຍມາກ່ອນ ແຕ່ບັນດາປະເທດເຫຼົ່ານີ້ ແມ່ນມີທີ່ຕັ້ງທີ່ໄກ້ຄຽງ ແລະ ການການພົວພັນທາງດ້ານເສດຖະກິດການຄ້າກັບລາວໃນໄລຍະຜ່ານມາເປັນຢ່າງດີ. ມີ 3 ປະເທດ (ມາເລເຊຍ, ອິນໂດເນເຊຍ ແລະ ຟີລິບປິນ) ທີ່ຢູ່ໃນກຸ່ມປະເທດອາຊຽນດຽວກັບລາວ ແລະພາຍໃຕ້ AEC ທີ່ຈະມາເຖິງ ອັດຕາພາສີນຳເຂົ້າເກືອບທັງໝົດ ຂອງກຸ່ມປະເທດອາຊຽນຈະເທົ່າສູນ ເຊິ່ງຈະເປັນໂອກາດອັນດີຂອງ ທຸລະກິດຄ້າເຂົ້າຂອງລາວໃນການແຂ່ງຂັນກັບປະເທດຕ່າງໆນອກເຂດອາຊຽນ. ແຕ່ເຖິງຢ່າງໃດກໍ່ດີ ປະເທດທີ່ເປັນຜູ້ສະ ໜອງຫຼັກຢູ່ສາມປະເທດລ້ວນແຕ່ແມ່ນ ປະ ເທດ

ຄ້າເຂົ້າລາຍໃຫຍ່ຂອງໂລກ (ໄທ ແລະ ຫວຽດນາມ) ແລະ ຍັງຕ້ອງໄດ້ສຶກສາໃຫ້ລະອຽດກ່ຽວກັບລິດສະນິດຍົມ ແລະ ສາດສະໜາ ທີ່ອາດເປັນຂໍ້ຈຳກັດຕໍ່ການຄ້າເຂົ້າຂອງລາວໄປປະເທດເຫຼົ່ານີ້; ຕະຫຼາດໃນຂົງເຂດອາຊີ ເຊັ່ນ ຈີນ, ຮ່ອງກົງ ແລະ ຍີ່ປຸ່ນ ກໍ່ລ້ວນແຕ່ເປັນຕະຫຼາດໃຫຍ່ ແລະ ມີ ແຮງຊື້ຫຼາຍ ເຖິງວ່າ ສປປ ລາວ ໃນປະຈຸບັນມີສ່ວນແບ່ງໜ້ອຍຫຼາຍໃນຕະຫຼາດເຫຼົ່ານີ້ (ຕຢ: ຮ່ອງກົງ) ແຕ່ຍ້ອນມີຄວາມ ໄດ້ປຽບທາງດ້ານພູມສັນຖານ (ຕຢ: ມີຊາຍແດນຕິດກັບຈີນ) ແລະ ໄດ້ຮັບອັດຕາພາສີນຳເຂົ້າສູນເປີເຊັນ ເຊັ່ນ: ຮ່ອງກົງ ແລະ ຍີ່ປຸ່ນ ອາດເປັນແມ່ແຮງໜຶ່ງໃນການສົ່ງອອກເຂົ້າຂອງລາວໄປຍັງສາມຕະຫຼາດນີ້. ສິ່ງທີ່ທ້າທາຍຫຼາຍຕໍ່ທຸລະກິດສົ່ງອອກເຂົ້າຂອງລາວໃນສາມປະເທດແມ່ນຄຸນນະພາບຂອງເຂົ້າທີ່ອາດຕ້ອງຜ່ານການກວດກາ ແລະ ຢັ້ງຢືນລະດັບສາກົນຈາກໜ່ວຍງານທີ່ກ່ຽວຂ້ອງ ເຊິ່ງການກວດກາມາດຖານ ແລະ ຢັ້ງຢືນຄຸນນະພາບຢູ່ລາວໃນປະຈຸບັນແມ່ນຍັງບໍ່ທັນຖືກ ຍອມ ຮັບຈາກສາກົນເທື່ອ. ດັ່ງນັ້ນການສຶກສາ ຕະຫຼາດຊ່ອງວ່າງ (Niche Market) ເຊັ່ນ: ເຂົ້າປອດສານພິດ ຫຼື ເຂົ້າອິນຊີ ແລະ ເຂົ້າພັນພື້ນເມືອງຕ່າງໆຂອງລາວ ອາດແມ່ນວິທີການໜຶ່ງໃນການຂະຫຍາຍຕະຫຼາດສົ່ງອອກເຂົ້າຂອງລາວຢູ່ບັນດາປະເທດເຫຼົ່ານີ້.

### 4.3 ການສຶກສາຕົ້ນທຶນ ແລະ ອຸປະສັກໃນການສົ່ງອອກເຂົ້າຂອງລາວ.

### ກ. ຕົ້ນທຶນການປູກເຂົ້າ

ການສຶກສາຕົ້ນທຶນການຜະລິດເຂົ້າແມ່ນສຳຄັນ ແລະ ຈຳເປັນຫຼາຍເພື່ອເປັນອີກວິທີໜຶ່ງໃນການວິເຄາະຄວາມອາດສາມາດໃນການແຂ່ງຂັນທາງດ້ານການຄ້າ ແລະ ການສົ່ງເຂົ້າອອກຂອງ ສປປ ລາວ. ອີງຕາມການສຶກສາຢູ່ນະຄອນຫຼວງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ ຂອງ*ສະຖາບັນລະຫວ່າງປະເທດເພື່ອການຄ້າ ແລະ ການພັດທະນາຂອງໄທ (ITD)* (2007) ພົບວ່າຕົ້ນທຶນລວມສະເລ່ຍໃນການປູກເຂົ້າຈ້າວນອກເຂດຊົນລະປະທານແມ່ນສູງກວ່າໝູ່ຖ້າທຽບກັບຕົ້ນທຶນການປູກເຂົ້າໜຽວ (ນອກເຂດ ແລະ ໃນເຂດຊົນລະປະທານ) ແລະ ເຂົ້າຈ້າວໃນເຂດຊົນລະປະທານ (ເບິ່ງຮູບທີ 9 ແລະ ເອກະສານຊ້ອນທ້າຍ 4 ສຳລັບລາຍລະອຽດຂອງຂໍ້ມູນ).

**ຮູບທີ 9**: ຕົ້ນທຶນປູກເຂົ້າຂອງ ສປປ ລາວ ປີ 2007 (ກີບ/ເຮັກຕາ).




ແຫຼ່ງຂໍ້ມູນ: *ບົດຄົ້ນຄ້ວາ ກົນໄກການສົ່ງອອກເຂົ້າຂອງ ສປປ ລາວ* ໂດຍ ITD 2007.

ຮູບສະແດງ 9 ສະແດງໃຫ້ເຫັນວ່າຕົ້ນທຶນສະເລ່ຍປູກເຂົ້າໜຽວນາປີນອກເຂດຊົນລະປະທານ ແມ່ນຕໍ່າກ່ວາການປູກເຂົ້ານາປີໃນເຂດຊົນລະປະທານ ໂດຍມີຕົ້ນທຶນປະມານ 3.241.260 ກີບ/ເຮັກຕາ ແລະ 4.453.497 ກີບ/ເຮັກຕາ ຕາມລຳດັບ. ສຳລັບຕົ້ນທຶນປູກເຂົ້າຈ້າວສະເລ່ຍໃນເຂດຊົນລະປະທານແມ່ນ 3.402.793 ກີບ/ເຮັກຕາ ແລະ ນອກຊົນລະປະທານແມ່ນ 3.920.476 ກີບ/ເຮັກຕາ. ມູນຄ່າໃຊ້ຈ່າຍທີ່ຫຼາຍກວ່າໝູ່ໃນຕົ້ນທຶນການປູກເຂົ້າແມ່ນ ຈ່າຍຄ່າແຮງງານ ຮອງລົງມາແມ່ນຊື້ອຸປະກອນຮັບໃຊ້ການຜະລິດ ເຊັ່ນ: ປຸຍ, ຢາຂ້າຫຍ້າ ແລະ/ຫຼື ຄ່ານ້ຳ (ລາຍລະອຽດເບິ່ງເອກະສານຊ້ອນທ້າຍ 4). ການສຶກສາຕົ້ນທຶນປູກເຂົ້າ

ຍັງຖືກສຶກສາໂດຍ*ສະຖາບັນຄົ້ນຄວ້າເສດຖະກິດການຄ້າ* ໃນປີ2013 ໂດຍໄດ້ເອົາເມືອງໜອງບົກ ແຂວງຄໍາມ່ວນເປັນກໍລະນີສຶກສາບັນຫານີ້ ແລະພົບວ່າ ຕົ້ນທຶນປູກເຂົ້ານາປີສະເລັ່ຍແມ່ນ 5.644.000 ກີບ/ເຮັກຕາ ແລະ ຕົ້ນທຶນປູກເຂົ້ານາແຊງແມ່ນ 7.144.000 ກີບ/ເຮັກຕາ. ນີ້ແມ່ນຂໍ້ມູນກ່ຽວກັບ ຕົ້ນທຶນປູກເຂົ້າທີ່ບົດສຶກສານີ້ຕ້ອງການນໍາສະເໜີເພື່ອເປັນບ່ອນອີງໃນການສົ່ງເສີມການປູກເຂົ້າເປັນສິນຄ້າຂອງ ສປປ ລາວ ໃນອານາຄົດ.

ການສຶກສາກ່ຽວກັບຕົ້ນທຶນປູກເຂົ້າຂອງປະເທດໄທ ແລະ ຫວຽດນາມ (ທີ່ເປັນສອງປະເທດສົ່ງອອກເຂົ້າລາຍໃຫຍ່ຂອງໂລກ) ກໍ່ເປັນອີກຂໍ້ມູນໜຶ່ງທີ່ສໍາຄັນເພື່ອສະໜັບສະໜູນການສົ່ງເສີມການສົ່ງອອກເຂົ້າຂອງ ສປປ ລາວ. ໂດຍ ອີງຕາມຜົນການສຶກສາຂອງ *ດຣ Aat Pisanwanich ຢູ່ມະຫາວິທະຍາໄລທຸລະກິດການຄ້າໄທ ໃນປີ 2011* ທີ່ເຮັດການສົມທຽບຕົ້ນທຶນປູກເຂົ້າຢູ່ແຂວງອາຍຸດທະຍາຂອງໄທ ແລະ ແຂວງເກີ່ນເທີຂອງຫວຽດນາມ ແມ່ນພົບວ່າ ຕົ້ນທຶນປູກເຂົ້າໂດຍລວມຂອງຫວຽດນາມແມ່ນປະມານ 7.779.688 ກີບ/ເຮັກຕາ ສ່ວນປະເທດໄທແມ່ນ 9.062.500 ກີບ/ເຮັກຕາ ເຊິ່ງສາມາດສະຫຼຸບໄດ້ວ່າຕົ້ນທຶນປູກເຂົ້າຂອງປະເທດຫວຽດນາມແມ່ນຕໍ່າກວ່າປະເທດໄທ. ຜົນການສຶກສານີ້ເຖິງວ່າຈະເປັນການສົມທຽບຢູ່ສອງແຂວງຂອງສອງປະເທດກໍ່ຕາມ ແຕ່ກໍ່ເຫັນໄດ້ວ່າ ຫວຽດນາມຈະມີຄວາມໄດ້ປຽບທາງດ້ານລາ ຄາຂາຍໃນຕະຫຼາດໂລກ ຫຼາຍກວ່າປະເທດໄທ. ດັ່ງນັ້ນ ຖ້າ ສປປ ລາວ ຕ້ອງການເພີ່ມຄວາມອາດສາມາດໃນການສົ່ງອອກເຂົ້າໄປຕະຫຼາດໂລກ ແມ່ນຈໍາເປັນຕ້ອງສຶກສາການຫຼຸດຜ່ອນຕົ້ນທຶນໃຫ້ຕໍ່າກວ່າປະເທດຫວຽດນາມຢູ່ສະເໝີ.

**ຂ. ອຸປະສັກໃນການສົ່ງເຂົ້າອອກໄປຕ່າງປະເທດ.**

**1) ຄ່າຂົນສົ່ງ.**

ດັ່ງທີ່ຮັບຮູ້ກັນວ່າ ສປປ ລາວ ແມ່ນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ການຄ້າຕ່າງປະເທດສ່ວນໃຫຍ່ແມ່ນ ຕ້ອງອາໃສການຂົນສົ່ງຜ່ານທ່າເຮືອປະເທດເພື່ອນບ້ານ ດັ່ງນັ້ນ ຄ່າຂົນສົ່ງໃນການສົ່ງອອກເຂົ້າຂອງ ສປປ ລາວ ຈຶ່ງອາດຈະສູງກວ່າປະເທດເພື່ອນບ້ານທີ່ມີຊາຍແດນຕິດທະເລ ເຊັ່ນ: ປະເທດໄທ ແລະ ຫວຽດນາມ. ເພື່ອສາມາດຍົກໃຫ້ເຫັນຕົ້ນທຶນການຂົນສົ່ງຂອງທຸລະກິດສົ່ງເຂົ້າອອກຂອງລາວ ບົດສຶກສານີ້ໄດ້ນໍາໃຊ້ສອງແຫຼ່ງຂໍ້ມູນ ຄື: ຈາກການສໍາພາດບໍລິສັດສົ່ງອອກເຂົ້າໃນປີ 2014 ແລະ ຈາກບົດສຶກສາຂອງ ITD ປີ 2007 ໃນການສຶກສາຄ່າຂົນສົ່ງ ດັ່ງລຸ່ມນີ້.

ໂດຍລວມສາມາດເວົ້າໄດ້ວ່າ ການສົ່ງອອກເຂົ້າໂດຍທາງບົກຈາກລາວໄປປະເທດທີສາມ ມັກຈະຜ່ານສອງປະເທດເພື່ອນບ້ານ ຄື: ໄທ ແລະ ຫວຽດນາມ. ຄ່າຂົນສົ່ງເຂົ້າສານ ໄປ ຢູໂຣບ ແລະ ອາເມລິກາ ສ່ວນຫຼາຍແມ່ນໄດ້ຂົນສົ່ງຜ່ານທ່າເຮືອນແຫຼມສະບັງ, ປະເທດໄທ ຈະມີຄ່າຂົນສົ່ງປະມານ 9.310.000 ກີບ[3] /ຕູ້ຄອນເທັນເນີຂະໜາດ 20 ຟຸດ (ລວມຄ່າໃຊ້ຈ່າຍລົງເຮືອ ແລະ ຄ່າໃບຂົນສົ່ງທາງເຮືອ ຫຼື B/L) ແຕ່ຖ້າຈະຂົນສົ່ງຜ່ານທ່າເຮືອດານັງ, ປະເທດຫວຽດນາມ ຄ່າຂົນສົ່ງຈະຢູ່ປະມານ 12.250.000 ກີບ[3]/ຕູ້ຄອນເທັນເນີຂະໜາດ 20 ຟຸດ. ທັງໝົດແມ່ນຄ່າໃຊ້ ຈ່າຍສໍາລັບຄ່າຂົນສົ່ງສິນຄ້າຈາກລາວໄປທ່າເຮືອປະເທດໄທ ແລະ ຫວຽດນາມ ເພື່ອຈະສົ່ງສິນຄ້າຕໍ່ໄປປະເທດທີສາມ.

**2) ລະບຽບການ ແລະ ຄ່າທໍານຽມເອກະສານ**

ລະບຽບການທີ່ໃຊ້ເພື່ອຄຸ້ມຄອງການສົ່ງອອກເຂົ້າສານຂອງ ສປປ ລາວ ແມ່ນອີງໃສ່ ດໍາລັດຂອງລັດຖະບານປີ 2012, ເລກທີ 114/ລບ ວ່າດ້ວຍ ການນໍາເຂົ້າ ແລະ ສົ່ງອອກ ສິນຄ້າ, ແລະ ແຈ້ງການປີ 2012, ເລກທີ 067/ອຄ.ກຂອ ວ່າດ້ວຍລາຍການສິນຄ້າທີ່ຕ້ອງຂໍອະນຸຍາດ ນໍາເຂົ້າ ຫຼື ສົ່ງອອກແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ. ດັ່ງນັ້ນ ການສົ່ງອອກເຂົ້າສານຂອງ ສປປ ລາວ ແມ່ນຕ້ອງຜ່ານຂະບວນການ

---

[3] ຄິດໄລ່ໂດຍໃຊ້ອັດຕາແລກປ່ຽນ 245 ກີບ/ບາດ ໃນເດືອນມີນາ 2014 ຈາກຄ່າຂົນສົ່ງ 38.000 ບາດ/ຕູ້ຄອນເທັນເນີ 20 ຟຸດ ໄປປະເທດໄທ ແລະ 50.000 ບາດ/ຕູ້ຄອນເທັນເນີ 20 ຟຸດ ໄປປະເທດຫວຽດນາມ *(ຈາກການສຶກສາຂອງສະຖາບັນລະຫວ່າງປະເທດເພື່ອການຄ້າ ແລະ ການພັດທະນາ - ITD ປີ 2007)*.

ຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງລວມທັງໝົດ 6 ຂະແໜງການ ໂດຍມີຄ່າທຳນຽມເອກະສານທີ່ໄດ້ສັງລວມໃນຕາຕະລາງ 8 ລຸ່ມນີ້:

ຕາຕະລາງ 8: ສະຫຼຸບຄ່າເອກະສານ ແລະ ທຳນຽມການສົ່ງອອກເຂົ້າສານ 22 ໂຕນ (1 ຕູ້ຄອນເທັນເນີ).

| **ລາຍການ** | **ມູນຄ່າ (ກີບ)** |
|---|---|
| ຂະແໜງອາຫານ ແລະ ຢາ | 134 400 |
| ຂະແໜງວິທະຍາສາດ ແລະ ເທັກໂນໂລຊີ | 81 000 |
| ຂະແໜງອຸດສາຫະກຳ ແລະ ການຄ້າ | 100 000 |
| ຂະແໜງກະສິກຳ ແລະ ປ່າໄມ້ | 287 000 |
| ສະມາຄົມໂຮງສີ | 110 000 |
| ຂະແໜງພາສີ | 405 000 |
| **ລວມທັງໝົດ** | **1 117 400** |
| **ລວມ (ກີບ/ໂຕນ)** | **50 791** |

ແຫຼ່ງຂໍ້ມູນ: ຈາກການສຳພາດບໍລິສັດສົ່ງອອກເຂົ້າປີ 2014.

ຈາກຂໍ້ມູນທີ່ສະແດງໃນຕາຕະລາງ 8 ຈະເຫັນໄດ້ວ່າຜູ້ສົ່ງອອກເຂົ້າສານຂອງລາວ ຈະຕ້ອງຜ່ານ 6 ຂະແໜງການ ແລະ ມີເອກະສານ + ຄ່າທຳນຽມ ທັງໝົດ 1.117.400 ກີບ/ປະລິມານເຂົ້າ 22 ໂຕນ ແລະ ຖ້າຄິດສະເລັ່ຍຄ່າໃຊ້ຈ່າຍ ຕໍ່ໂຕນຈະຕົກຢູ່ 50.791 ກີບ/ໂຕນ (ເບິ່ງລາຍລະອຽດຄ່າໃຊ້ຈ່າຍຢູ່ເອກະສານຊ້ອນທ້າຍ 5).

ນອກຈາກນັ້ນ ຈາກຂໍ້ມູນຈາກ*ຜົນການສຶກສາເບື້ອງຕົ້ນເພື່ອເຮັດໃຫ້ຂັ້ນຕອນການຂໍອະນຸຍາດສົ່ງອອກເຂົ້າງ່າຍຂຶ້ນ, ກະຊວງອຸດສາຫະກຳ ແລະ ການຄ້າ ປີ 2013* ພົບວ່າ ທຸລະກິດທີ່ສົ່ງອອກເຂົ້າຂອງ ສປປ ລາວ ກ່ອນຈະສົ່ງອອກຈະຕ້ອງຂໍອະນຸຍາດສົ່ງອອກເຂົ້າທຸກຄັ້ງ ຈາກຂະແໜງການທີ່ກ່ຽວຂ້ອງ ໂດຍເອກະສານບາງຢ່າງແມ່ນຂໍຂໍ້ມູນດຽວກັນ ຫຼື ຊໍ້າຊ້ອນກັນ ເຊິ່ງໄດ້ເຮັດໃຫ້ເສຍເວລາ ແລະ ເພີ່ມຕົ້ນທຶນໃຫ້ແກ່ທຸລະກິດ. ຕົວຢ່າງ: ທຸລະກິດສົ່ງອອກເຂົ້າຕ້ອງປະກອບເອກະສານຢ່າງໜ້ອຍ 4-7 ຢ່າງເພື່ອຍື່ນຂໍອະນຸຍາດສົ່ງອອກ, ລໍຖ້າເອກະສານຖືກອະນຸຍາດປະມານ 4-7 ມື້ ແລະ ມີມູນຄ່າໃຊ້ຈ່າຍລວມຕໍ່ຄັ້ງແມ່ນ 375.000 ກີບຕໍ່ຄັ້ງ. ດັ່ງນັ້ນ ສະຫຼຸບແລ້ວການສົ່ງອອກເຂົ້າຂອງ ສປປ ລາວ ແມ່ນບໍ່ງ່າຍປານໃດ, ມີຫຼາຍຂັ້ນຕອນກອດກາ ເຮັດໃຫ້ໄລຍະເວລາຂໍອະນຸຍາດສົ່ງອອກເຂົ້າຊັກຊ້າ ແລະ ເຮັດໃຫ້ທຸລະກິດ ມີຕົ້ນທຶນໃນການດຳເນີນທຸລະກິດສົ່ງອອກເຂົ້າເພີ່ມຂຶ້ນ.

### 4.4. ການສຶກສາລາຄາເຂົ້າ.

### ກ. ລາຄາຊື້ຂາຍເຂົ້າຂອງລາວ.

ການສຶກສາລາຄາເຂົ້າຂອງລາວໃນບົດສຶກສານີ້ ແມ່ນຈະວິເຄາະເບິ່ງສະພາບການເໜັງຕີງຂອງລາຄາເຂົ້າເປືອກ ຂອງລາວຢູ່ ນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ ທີ່ມີການປູກເຂົ້າຫຼາຍເປັນອັນດັບຕົ້ນຂອງປະເທດ ແລະ ມີໂຮງສີເຂົ້າ ຫຼື ບໍລິສັດສົ່ງອອກເຂົ້າ ທີ່ສ່ວນໃຫຍ່ມັກຈະຊື້ເຂົ້າເປືອກຈາກປະຊາຊົນເພື່ອນຳມາສີ ແລ້ວສົ່ງຂາຍໃຫ້ລູກຄ້າຕາມການສັ່ງຊື້. ລາຄາເຂົ້າເປືອກທີ່ເພີ່ມຂຶ້ນ ຫຼື ຫຼຸດລົງຈະມີຜົນກະທົບໂດຍກົງຕໍ່ບໍລິສັດສົ່ງອອກເຂົ້າທີ່ຕ້ອງມີຕົ້ນທຶນຫຼາຍຂຶ້ນຖ້າໃນກໍລະນີລາຄາເຂົ້າຫາກແພງຂຶ້ນ ຫຼື ມີຄວາມໄດ້ປຽບໃນການແຂ່ງຂັນຫຼາຍຂຶ້ນຖ້າໃນກໍລະນີລາຄາເຂົ້າຫາກຫຼຸດລົງ. ຮູບສະແດງທີ 10 ແລະ 11 ໄດ້ສະແດງຂໍ້ມູນກ່ຽວກັບລາຄາເຂົ້າເປືອກໜຽວ ແລະ ເຂົ້າເປືອກຈ້າວຢູ່ນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ ທີ່ໂດຍລວມແລ້ວເຫັນວ່າລາຄາເຂົ້າ ເປືອກທັງສອງຊະນິດແມ່ນມີລາຄາຫຼຸດລົງຖ້າສົມທຽບໄລຍະເວລາແຕ່ປີ 2011 - 2013. ແຂວງຈຳປາສັກມີລາຄາເຂົ້າເປືອກຕໍ່າກ່ວາໝູ່ ໂດຍມີ ລາຄາສະ

ເລັ່ຍ 1.934 ກີບ/ກິໂລ ສໍາລັບແຂວງທີ່ມີລາຄາເຂົ້າເປືອກຈ້າວຕໍ່າກວ່າໝູ່ແມ່ນແຂວງຄໍາມ່ວນ. ແຕ່ເຖິງຢ່າງໃດກໍ່ດີ ໃນທ້າຍປີ 2013 ລາຄາເຂົ້າເປືອກຂອງ 4 ແຂວງແມ່ນເຫັນວ່າມີລັກສະນະຍັບໃກ້ເຂົ້າຫາກັນ ລາຄາເຂົ້າເປືອກໜຽວແຂວງສະຫວັນນະເຂດ ແລະ ຈໍາປາສັກ ມີລາຄາ 1.906 ກີບ/ກິໂລ ເທົ່າກັນ ແລະ ສອງແຂວງ ທີ່ມີລາຄາເຂົ້າເປືອກຈ້າວໃກ້ຄຽງກັນແມ່ນແຂວງຄໍາມ່ວນ ແລະ ຈໍາປາສັກ 2.486ກີບ/ກິໂລ ແລະ 2.541ກີບ/ກິໂລ ຕາມລໍາດັບ (ລາຍລະອຽດເບິ່ງເອກະສານຊ້ອນທ້າຍ 6).

ຮູບທີ 10: ລາຄາເຂົ້າເປືອກໜຽວ




ຮູບທີ 11: ລາຄາເຂົ້າເປືອກຈ້າວ




ແຫຼ່ງຂໍ້ມູນ: ຂໍ້ມູນຈາກກົມການຄ້າພາຍໃນ, ກະຊວງ ອຄ.
ໝາຍເຫດ: ນີ້ແມ່ນລາຄາຈິງ (Real Price) ທີ່ໄດ້ຄິດໄລ່ໂດຍໃຊ້ອັດຕາເງິນເຟີ້ຂອງ ເດືອນ 1 ປີ 2006 ເປັນຖານ.

**ຂ. ລາຄາສົ່ງອອກເຂົ້າຂອງໄທ ແລະ ຫວຽດນາມ.**

ໃນຕະຫຼາດໂລກມີເຂົ້າຫຼາຍຊະນິດທີ່ມີການຊື້ຂາຍລະຫວ່າງກັນ ແລະ ລາຄາຂອງເຂົ້າແຕ່ລະຊະນິດ ກໍ່ແຕກຕ່າງກັນ. ດັ່ງນັ້ນ ບົດສຶກສານີ້ຈິ່ງໄດ້ເລືອກລາຄາຊະນິດເຂົ້າຂອງໂລກ ທີ່ໃກ້ຄຽງກັບຊະນິດເຂົ້າທີ່ ສປປ ລາວ ໄດ້ປູກ ແລະ ສົ່ງອອກໃນໄລຍະຜ່ານມາ ເພື່ອເຮັດການວິເຄາະ.

ໂດຍອີງຕາມການລາຍງານທາງດ້ານສະຖິຕິຂອງອົງການອາຫານ ແລະ ກະສິກໍາຂອງໂລກ (FAO) ທີ່ສະແດງໃຫ້ໃນຕາຕະລາງ 9 ແລະ ຮູບທີ 10 ລຸ່ມນີ້ ຊີ້ໃຫ້ເຫັນວ່າ ລາຄາຂາຍເຂົ້າຂອງປະເທດທີ່ສົ່ງອອກເຂົ້າລາຍໃຫຍ່ຂອງໂລກ ເຊັ່ນ: ໄທ ແລະ ຫວຽດນາມ ຕ່າງກໍ່ມີທ່າອ່ຽງຫຼຸດລົງ. ລາຄາຂາຍເຂົ້າຊະນິດເມັດຫັກ 5% ແລະ 25% ຂອງໄທແມ່ນສູງ ກວ່າຫວຽດນາມ ຕົວຢ່າງ: ເຂົ້າໄທເມັດຫັກ 5% ຂອງໄທລາຄາຂາຍສະເລັ່ຍໃນເດືອນກຸມພາ 2014 ແມ່ນ 459ໂດລາ/ໂຕນ ສ່ວນຫວຽດນາມ 388ໂດລາ/ໂຕນ. ລາຄາເຂົ້າໜຽວຂາວ 10% ທີ່ໄທສົ່ງອອກໃນເດືອນກຸມພາ ປີ 2014 ແມ່ນ 876ໂດລາ/ໂຕນ ຖືວ່າເປັນລາຄາຕໍ່າຫຼາຍຖ້າທຽບໃສ່ໄລຍະຜ່ານມາ (ນັບແຕ່ປີ 2010-2013).

ຕາຕະລາງ 9: ສະຖິຕິລາຄາສົ່ງອອກເຂົ້າຂອງໄທ ແລະ ຫວຽດນາມ.

ຫົວໜ່ວຍ: ໂດລາ/ໂຕນ, ລາຄາ FOB

| ລ/ດ | ເຂົ້າໄທເມັດຫັກ 5% | ເຂົ້າຫວຽດນາມເມັດຫັກ 5% | ເຂົ້າໄທເມັດຫັກ 25% | ເຂົ້າຫວຽດນາມເມັດຫັກ 25% | ເຂົ້າໜຽວຂາວ 10% |
|---|---|---|---|---|---|
| 2009 | 555 | 432 | 460 | 384 | 520 |
| 2010 | 492 | 416 | 444 | 387 | 902 |
| 2011 | 549 | 505 | 511 | 467 | 999 |
| 2012 | 573 | 432 | 560 | 397 | 813 |
| 2013 | 518 | 391 | 504 | 363 | 935 |
| 2014 | | | | | |
| ມັງກອນ | 450 | 401 | 377 | 380 | - |
| ກຸມພາ | 459 | 388 | 382 | 368 | 876 |

ແຫຼ່ງຂໍ້ມູນ: ຄັດຈາກການລາຍງານຂໍ້ມູນລາຄາເຂົ້າຂອງອົງການອາຫານ ແລະ ກະສິກຳໂລກ (2014) ແລະ ສະມາຄົມຜູ້ສົ່ງອອກເຂົ້າໄທ (2014).

ຮູບສະແດງ 12: ທິດທາງລາຄາສົ່ງອອກເຂົ້າຂອງໄທ ແລະ ຫວຽດນາມ.




